ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

pwc

ເອກະສານລາຍງານການເງິນ

31 ທັນວາ 2023



www.pwc.com/la

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ເອກະສານລາຍງານການເງິນ
31 ທັນວາ 2023

ສາລະບານ	**ໜ້າ**
ບົດລາຍງານຂອງຜູ້ກວດສອບອິດສະຫຼະ	1-5
ໃບລາຍງາຍຖານະການເງິນ	6-7
ໃບລາຍງານຜົນໄດ້ຮັບ	8
ໃບລາຍງານສ່ວນປ່ຽນແປງທຶນ	9
ໃບລາຍງານກະແສເງິນສົດ	10-11
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ	12-32

pwc

ບົດລາຍງານຂອງຜູ້ກວດສອບອິດສະຫຼະ

ເຖິງ: ສະພາຜູ້ອຳນວຍການ ແລະ ຜູ້ຖືຮຸ້ນ ຂອງ ບໍລິສັດ ປິໂຕຣລັ້ງມເທຣດດິ້ງ ລາວ ມະຫາຊົນ ບໍລິສັດ

ຄຳເຫັນຂອງພວກເຮົາ

ພວກເຮົາມີຄຳເຫັນວ່າເອກະສານລາຍງານການເງິນ ຂອງ ບໍລິສັດ ປິໂຕຣລັ້ງມເທຣດດິ້ງ ລາວ ມະຫາຊົນ (ບໍລິສັດ) ວັນທີ 31 ທັນວາ 2023 ໄດ້ຖືກສ້າງຂຶ້ນໄດ້ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ເຊິ່ງອະທິບາຍໃນ ບົດອະທິບາຍຊ້ອນທ້າຍ ຂໍ້ທີ 2 ຂອງເອກະສານ ລາຍງານສະບັບນີ້.

ການກວດສອບຂອງພວກເຮົາມີດັ່ງນີ້:

ເອກະສານລາຍງານການເງິນຂອງ ບໍລິສັດ ປະກອບດ້ວຍ:

- ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2023;
- ໃບລາຍງານຜົນໄດ້ຮັບສຳລັບທ້າຍປີ;
- ໃບລາຍງານສ່ວນປ່ຽນແປງທຶນສຳລັບທ້າຍປີ;
- ໃບລາຍງານກະແສເງິນສົດສຳລັບທ້າຍປີ; ແລະ
- ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ, ເຊິ່ງສັງລວມນະໂຍບາຍການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ

ພື້ນຖານໃນການອອກຄຳເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານການກວດສອບສາກົນໄດ້ລະບຸໄວ້ໃນວັກ ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ ຂອງບົດລາຍງານ ພວກເຮົາ.

ພວກເຮົາເຊື່ອວ່າພວກເຮົາໄດ້ຮັບຫຼັກຖານການກວດສອບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄຳເຫັນຂອງພວກເຮົາ.

ຄວາມເປັນອິດສະຫຼະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກບໍລິສັດ ຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບວິຊາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນ ນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບ ຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ຂໍ້ມູນ ແລະ ເຫດການທີ່ເນັ້ນ - ພື້ນຖານ ການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນ, ເຊິ່ງໄດ້ອະທິບາຍເຖິງພື້ນຖານການກະກຽມເອກະສານລາຍງານການເງິນ. ບົດລາຍງານການເງິນໄດ້ຖືກກະກຽມຕາມນະໂຍບາຍການບັນຊີຂອງບໍລິສັດ ເຊິ່ງພື້ນຖານການບັນຊີທີ່ໃຊ້ໃນການກະກຽມບົດລາຍງານການເງິນນີ້ອາດຈະແຕກຕ່າງຈາກມາດຕະຖານການລາຍງານການເງິນສາກົນ ("IFRS"). ດັ່ງນັ້ນ, ຜູ້ທີ່ນຳໃຊ້ ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນ ແລະ ຜົນການດຳເນີນງານ ແລະ ກະແສເງິນສົດ ຕາມ IFRS. ຄວາມເຫັນຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

pwc

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ແມ່ນ ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນສຳລັບປີປັດຈຸບັນ. ພວກເຮົາກຳນົດ ເລື່ອງການກວດສອບທີ່ສຳຄັນ: ການຮັບຮູ້ລາຍຮັບສຳລັບລາຍຮັບໃນການຂາຍສິ່ງ ພວກເຮົາໄດ້ນຳເນື້ອໃນສຳຄັນເຫຼົ່ານີ້ມາລວມໃນການກວດສອບເອກະສານລາຍງານການເງິນ ເພື່ອສະແດງຄຳເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄຳເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບ
ການຮັບຮູ້ລາຍຮັບຂອງການຂາຍຍົກ ອີງຕາມບົດອະທິບາຍຂໍ້ 2.14 "ນະໂຍບາຍການບັນຊີ - ການຮັບຮູ້ລາຍຮັບ' ແລະ ບົດອະທິບາຍຂໍ້ 18 "ລາຍຮັບ" ລາຍຮັບຈາກກິດຈະກຳຫຼັກຂອງ ບໍລິສັດ ແມ່ນ ລາຍຮັບຈາກການບໍລິການບັດເຕີມນ້ຳມັນ plus card. ໄລຍະເວລາໃນການປະມວນຜົນຂອງຂໍ້ມູນ ແລະ ບົດລາຍງານຕ່າງໆທີ່ກ່ຽວຂ້ອງກັບການຂາຍນ້ຳມັນຂອງກຸ່ມບໍລິສັດ ແມ່ນອາດມີຜົນກະທົບໂດຍກົງຕໍ່ຄວາມຖືກຕ້ອງຂອງການຮັບຮູ້ລາຍຮັບເນື່ອງຈາກຄວາມແຕກຕ່າງຂອງເວລາ. ໄລຍະເວລາໃນຂະບວນການປະມວນຜົນຂໍ້ມູນ ແລະ ອອກໃບເກັບເງິນ ອາດເຮັດໃຫ້ເກີດຄວາມສ່ຽງໃນຄວາມຄົບຖ້ວນ ແລະ ການສະສາງບັນຊີ. ພວກເຮົາໃຫ້ຄວາມສຳຄັນໃນເລື່ອງນີ້ ອັນເນື່ອງມາຈາກຮອບວຽນການອອກໃບຮຽກເກັບເງິນທີ່ອາດຈະບໍ່ກົງກັບມື້ປິດບັນຊີທ້າຍປີສະເໝີໄປ, ສະນັ້ນ ຜູ້ບໍລິຫານ ອາດຈະຕ້ອງກຳນົດການຮັບຮູ້ລາຍຮັບ ໃນການຄາດຄະເນລາຍຮັບໃນທ້າຍປີ.	ພວກເຮົາປະຕິບັດຕາມຂັ້ນຕອນການກວດສອບດັ່ງຕໍ່ໄປນີ້: • ປະເມີນ ລະບົບການຄວບຄຸມ ທີ່ກ່ຽວຂ້ອງ ສຳລັບຂັ້ນຕອນ ການຮັບຮູ້ລາຍຮັບ. ເພື່ອໃຫ້ໄດ້ຄວາມໝັ້ນໃຈວ່າ ການອອກໃບບິນ ແລະ ລະບົບການເຮັດວຽກຕ່າງໆມີຄວາມ ໜ້າເຊື່ອຖື ແລະ ລະບົບການຄວບຄຸມ ແມ່ນສອດຄ່ອງກັບລະບົບທີ່ກ່ຽວຂ້ອງ. • ກວດກາໃບຮຽກເກັບເງິນ ຂອງລູກຄ້າລາຍບຸກຄົນ ແລະ ບໍລິສັດ ທຽບໃສ່ການອະນຸມັດ ແລະ ກວດກາກ່ອນທີ່ຈະບັນທຶກໃນບັນຊີແຍກປະເພດທົ່ວໄປ ແລະ ໃບຮັບເງິນສົດ. • ກວດກາການກະທົບຍອດລະຫວ່າງ ບົດລາຍງານສັງລວມລາຍຮັບ ແລະ ບັນຊີໃຫຍ່ແຍກປະເພດ ເຊິ່ງລວມເຖິງການກວດສອບຂັ້ນຕອນການບັນທຶກລາຍການປັບປຸງ ໂດຍການສົມທຽບກັບເອກະສານທີ່ກ່ຽວຂ້ອງຂອງລາຍຮັບ. • ກວດກາລາຍລະອຽດຂອງການສະສາງລາຍຮັບໂດຍເລືອກກຸ່ມຕົວຢ່າງກ່ອນ ແລະ ຫຼັງ ປີປິດບັນຊີ ເພື່ອກວດກາວ່າລາຍການດັ່ງກ່າວຖືກບັນທຶກຢ່າງຄົບຖ້ວນໃນເວລາທີ່ເໝາະສົມ ຕາມຂໍ້ກຳນົດ ແລະ ເງື່ອນໄຂທີ່ກຳນົດໄວ້ໃນໃບແຈ້ງໜີ້ ແລະ ເອກະສານການສົ່ງມອບ. • ກວດກາກຸ່ມຕົວຢ່າງລາຍການບັນທຶກບັນຊີ ຂອງລາຍຮັບແຕ່ລະປະເພດ ທີ່ເກີດຂຶ້ນພາຍໃນປີ ໂດຍການສົມທຽບລາຍການບັນທຶກບັນຊີກັບໃບຮຽກເກັບເງິນ ແລະ ເອກະສານທີ່ກ່ຽວຂ້ອງຕ່າງໆ. ຈາກຜົນຂອງການກວດສອບເຫຼົ່ານີ້ ພວກເຮົາພົບວ່າ ການຮັບຮູ້ລາຍຮັບ ແມ່ນໄດ້ບັນທຶກບັນຊີຢ່າງເໝາະສົມ, ສອດຄ່ອງກັບນະໂຍບາຍການບັນຊີ ແລະ ເອກະສານທີ່ມີ.

ຂໍ້ມູນອື່ນໆ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນໆອີກເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານການເງິນປະຈຳປີ ແຕ່ບໍ່ລວມເຖິງ ເອກະສານ ລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດວ່າຈະໄດ້ຮັບເອກະສານລາຍ ງານການເງິນປະຈຳປີ ພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ເພື່ອໃຫ້ສອດຄ່ອງກັບການກວດສອບ ຂອງພວກເຮົາຕໍ່ກັບເອກະສານລາຍງານການເງິນສັງລວມກິດຈະການ, ຄວາມຮັບຜິດຊອບຂອງພວກເຮົາ ທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ ຄືການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນມີຄວາມຂັດແຍ່ງທີ່ເປັນສາລະສຳຄັນ ກັບ ເອກະສານລາຍງານການເງິນ ຫຼື ກັບຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມ ເປັນຈິງທີ່ເປັນສາລະສຳຄັນ ຫຼື ບໍ່.

ໂດຍອີງຕາມການທົບທວນ ຂອງພວກເຮົາ, ຫາກພວກເຮົາພົບວ່າມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ. ພວກເຮົາ ຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດສອບ ແລະ ຜູ້ບໍລິຫານຮັບຊາບເພື່ອດັດແກ້ ແລະ ເຜີຍແຜ່ບົດລາຍງານອີກເທື່ອໜຶ່ງ.

ຄວາມຮັບຜິດຊອບຂອງສະພາ ຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນໂດຍສອດຄ່ອງກັບ ນະໂຍບາຍການບັນຊີ ດັ່ງທີ່ໄດ້ ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການຄວບຄຸມພາຍໃນ ເຊິ່ງຜູ້ອຳນວຍການໄດ້ກຳ ນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນ ທີ່ປາສະຈາກການລາຍງານບໍ່ຖືກຕ້ອງ ອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດ ຂອງບໍລິສັດ ໃນການດຳ ເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງ ຕາມຄວາມເໝາະສົມ ແລະ ການໃຊ້ພື້ນຖານບັນຊີສຳຫຼັບ ການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການມີຄວາມຕັ້ງໃຈທີ່ຈະຍຸບ ກິດຈະການ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະຜູ້ບໍລິຫານ ໄດ້ຊ່ວຍຜູ້ອຳນວຍການ ໃນເລື່ອງຄວາມຮັບຜິດຊອບ ຂອງພວກເຂົາຕໍ່ກັບຂັ້ນຕອນໃນການກຽມບົດລາຍງານການເງິນ.

ຄວາມຮັບຜິດຊອບຂອງ ຜູ້ກວດສອບ ຕໍ່ເອກະສານລາຍງານການເງິນ

ວັດຖຸປະສົງ ຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນ ປາສະຈາກການສະແດງຂໍ້ມູນ ຜິດພາດທີ່ເປັນສາລະສຳຄັນ. ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄຳເຫັນຂອງພວກເຮົາຕໍ່ເອກະສານລາຍງານການເງິນ ເຊິ່ງລວມທັ້ງການອອກຄຳເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງເຊິ່ງບໍ່ໄດ້ເປັນການ ຮັບປະກັນວ່າການດຳເນີນການກວດສອບຕາມມາດຕະຖານການກວດສອບບັນຊີສາກົນຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ. ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ພິຈາລະນາວ່າ ເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກລາຍການລວມກັນມີ ຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້.

ໃນການກວດສອບຂອງພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ. ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີ ຕະຫຼອດການກວດສອບ. ການດຳເນີນງານຂອງພວກເຮົາລວມມີ:

- ລະບຸ ແລະ ປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນ ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ວາງແຜນ ແລະ ດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫາຫຼັກຖານທີ່ ພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດຢ່າງເປັນ ສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ, ເນື່ອງຈາກການສໍ້ໂກງອາດເກີດຈາກການສົມຮູ້ຮ່ວມ ຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການ ຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນ ໃນການກວດສອບທີ່ແທດເໝາະກັບສະພາບຕົວຈິງ, ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບ ປະສິດທິຜົນຂອງການຄວບ ຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນຂອງການຄາດຄະເນທາງບັນຊີ ລວມທັງ ການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການໃຊ້ພື້ນຖານບັນຊີສຳຫຼັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການໂດຍອີງຕາມ ຫຼັກ ຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນ ທີ່ກ່ຽວກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດ ຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼືບໍ່. ຖ້າພວກເຮົາສະຫຼຸບໄດ້ວ່າຄວາມບໍ່ ແນ່ນອນທີ່ມີສາລະສຳຄັນ ພວກເຮົາຕ້ອງກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບ ຂອງພວກເຮົາກັບຂໍ້ມູນທີ່ກ່ຽວຂ້ອງທີ່ໄດ້ເປີດເຜີຍ ໃນເອກະສານລາຍງານການເງິນ, ຫຼື ຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍ ຄຳເຫັນຂອງພວກເຮົາຈະປ່ຽນແປງໄປ. ຂໍ້ສະຫຼຸບຂອງພວກເຮົາ ຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີ່ໃນບົດລາຍງານ ຂອງພວກເຮົາ. ເຖິງຢ່າງໃດກໍຕາມ, ເຫດການ ຫຼື ສະພາບຕົວ ຈິງໃນອນາຄົດອາດເປັນສາເຫດໃຫ້ ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້, ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນ ທີ່ພົບລະຫວ່າງ ການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫລັກຈັນຍາບັນກ່ຽວຂ້ອງກັບຄວາມເປັນ ອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດ ລວມເຖິງເລື່ອງອື່ນທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະ ຂອງພວກເຮົາ ແລະ ຫລັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນ ອິດສະຫຼະ.

ຈາກບັນຫາທີ່ປຶກສາກັບຄະນະກຳມະການກວດສອບ ພວກເຮົາໄດ້ພິຈາລະນາບັນຫາເຫຼົ່ານັ້ນແມ່ນບັນຫາທີ່ມີສາລະສຳຄັນທີ່ສຸດໃນການກວດສອບເອກະສານລາຍງານການເງິນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບ, ຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບບໍ່ໃຫ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນສະພາບການທີ່ຍາກຈະເກີດຂຶ້ນ ພວກເຮົາພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດດັ່ງກ່າວສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດ ຕໍ່ສ່ວນໄດ້ເສຍສາທາລະນະຈາກການສື່ສານດັ່ງກ່າວ.

ບໍລິສັດ ພຣາຍສ໌ວໍເຕີເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດ ຜູ້ດຽວ

ທ່ານ ພິງພັນ ດຳຣິງພັນອຸດົມ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ ສປປ ລາວ
ວັນທີ: 25 ເມສາ 2024

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 31 ທັນວາ 2023

ຊັບສິນ	ບິດ ອະທິບາຍ	2023 ກີບ	2022 ກີບ
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	4,812,188,424	5,494,674,970
ໜີ້ຕ້ອງຮັບທາງການຄ້າ,ສຸດທິ	4	24,176,310,558	22,455,453,337
ສິນຄ້າໃນສາງ-ສຸດທິ	5	800,980,532	399,335,819
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	23.5	145,733,311,964	139,898,947,042
ຊັບສິນໝຸນວຽນອື່ນໆ	6	491,927,151,491	542,108,548,402
ລວມຊັບສິນໝຸນວຽນ		**667,449,942,969**	**710,356,959,570**
ຊັບສິນບໍ່ໝຸນວຽນ			
ຊັບສົມບັດຄົງທີ່ມີຕົວຕົນ,ສຸດທິ	7	371,951,926,724	372,037,173,827
ຊັບສົມບັດຄົງທີ່ບໍ່ມີຕົວຕົນ,ສຸດທິ	8	2,083,635,172	2,896,193,364
ຊັບສົມບັດຄົງທີ່ເພື່ອການລົງທຶນ,ສຸດທິ	9	199,477,136,681	200,162,726,629
ການລົງທຶນໃນບໍລິສັດໃນເຄືອ	10	198,000,000,000	198,000,000,000
ຊັບສິນບໍ່ໝຸນວຽນອື່ນໆ	11	45,304,018,757	46,561,690,945
ລວມຊັບສິນບໍ່ໝຸນວຽນທັງໝົດ		**816,816,717,334**	**819,657,784,765**
ລວມຊັບສິນທັງໝົດ		**1,484,266,660,303**	**1,530,014,744,335**

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການ

ວັນທີ: 25 ເມສາ 2024

ທ່ານ ນາງ ຈັນທະດອມ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 25 ເມສາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 33 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ປິໂຕຣລັງມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ກີບ	2022 ກີບ
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງທາງການຄ້າ	12	6,770,227,722	7,185,390,779
ໜີ້ຕ້ອງສົ່ງອາກອນ	13	7,025,103,861	8,393,697,123
ເງິນກູ້ຢືມໄລຍະສັ້ນ	14	293,799,915,008	191,355,503,214
ໜີ້ສິນໝຸນວຽນອື່ນໆ	15	244,650,352,617	279,178,512,954
ລວມໜີ້ສິນໝຸນວຽນທັງໝົດ		**552,245,599,208**	**486,113,104,070**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	14	514,855,649,756	584,370,984,000
ລວມໜີ້ສິນບໍ່ໝຸນວຽນທັງໝົດ		**514,855,649,756**	**584,370,984,000**
ລວມໜີ້ສິນທັງໝົດ		**1,067,101,248,964**	**1,070,484,088,070**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	16	470,000,000,000	470,000,000,000
ສ່ວນເພີ່ມມູນຄ່າຮຸ້ນ	16	27,638,932,340	27,638,932,340
ສ່ວນເພີ່ມຈາກການຕີມູນຄ່າ		313,029,203,069	313,029,203,069
ກຳໄລ/(ຂາດທຶນ) ສະສົມ			
ຈັດສັນ - ຄັງແຮຕາມລະບຽບການ	17	3,708,530,711	3,708,530,711
ຄັງແຮອື່ນໆ		1,977,267,979	1,977,267,979
ຂາດທຶນສະສົມລໍຖ້າແບ່ງປັນ		(399,188,522,760)	(356,823,277,834)
ລວມທຶນທັງໝົດ		**417,165,411,339**	**459,530,656,265**
ລວມໜີ້ສິນ ແລະ ທຶນ ທັງໝົດ		**1,484,266,660,303**	**1,530,014,744,335**

ບໍລິສັດ ປິໂຕຣລັ່ມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການ

ວັນທີ: 25 ເມສາ 2024

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 25 ເມສາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ປິໂຕຣລັ້ມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ກີບ	2022 ກີບ
ລາຍຮັບ	18	2,050,135,402	1,733,080,077
ຕົ້ນທຶນຂາຍ		(92,187,130)	(64,435,437)
ກຳໄລເບື້ອງຕົ້ນ		**1,957,948,272**	**1,668,644,640**
ລາຍຮັບອື່ນໆ	19	56,890,513,436	66,795,925,396
(ຂາດທຶນ)/ກຳໄລ ຈາກອັດຕາແລກປ່ຽນ, ສຸດທິ		(8,438,580,016)	190,454,943
ລາຍຈ່າຍໃນການຂາຍ		(104,096,340)	(276,727,000)
ລາຍຈ່າຍບໍລິຫານ		(26,680,512,733)	(23,758,882,306)
ກຳໄລຈາກການດຳເນີນງານ		**23,625,272,619**	**44,619,415,673**
ລາຍຈ່າຍທາງການເງິນ		(65,990,517,545)	(50,585,808,240)
ຂາດທຶນ ສຸດທິກ່ອນຫັກອາກອນ		**(42,365,244,926)**	**(5,966,392,567)**
ອາກອນກຳໄລ	21	-	-
ຂາດທຶນ ສຸດທິສຳລັບປີ		**(42,365,244,926)**	**(5,966,392,567)**
ຂາດທຶນ ຕໍ່ຮຸ້ນ			
ຂາດທຶນ ພື້ນຖານຕໍ່ຮຸ້ນ	22	(180)	(25)

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການ

ວັນທີ: 25 ເມສາ 2024

ທ່ານ ນາງ ຈັນທະຄອນ ເພກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 25 ເມສາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

	ປີດ ອະທິບາຍ	ທຶນຈົດທະບຽນ ທີ່ຖອກແລ້ວ ກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ກີບ	ສ່ວນເພີ່ມຈາກ ການຕີມູນຄ່າ ກີບ	ກຳໄລ/(ຂາດທຶນ)ສະສົມ ຄັ່ງແຮຕາມ ລະບຽບການ ກີບ	ຄັ່ງແຮອື່ນໆ ກີບ	ຂາດທຶນສະສົມ ລໍ້ຖ້າແບ່ງປັນ ກີບ	ລວມ ກີບ
ຍອດຍົກມາໃນວັນທີ 1 ມັງກອນ 2022	16,17	**470,000,000,000**	**27,638,932,340**	-	**3,708,530,711**	**1,977,267,979**	**(350,856,885,267)**	**152,467,845,763**
ເພີ່ມຂຶ້ນ		-	-	313,029,203,069	-	-	-	313,029,203,069
ຂາດທຶນສຸດທິສຳລັບປີ		-	-	-	-	-	(5,966,392,567)	(5,966,392,567)
ຍອດເຫຼືອໃນວັນທີ 31 ທັນວາ 2022		**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(356,823,277,834)**	**459,530,656,265**
ຍອດຍົກມາໃນວັນທີ 1 ມັງກອນ 2023	16,17	**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(356,823,277,834)**	**459,530,656,265**
ຂາດທຶນສຸດທິສຳລັບປີ		-	-	-	-	-	(42,365,244,926)	(42,365,244,926)
ຍອດເຫຼືອໃນວັນທີ 31 ທັນວາ 2023		**470,000,000,000**	**27,638,932,340**	**313,029,203,069**	**3,708,530,711**	**1,977,267,979**	**(399,188,522,760)**	**417,165,411,339**

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການ

ວັນທີ: 25 ເມສາ 2024

ທ່ານ ນາງ ຈັນທະດອນ ເພກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 25 ເມສາ 2024

ປິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ປິໂຕຣລັງມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ກີບ	2022 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ຂາດທຶນກ່ອນຫັກອາກອນກຳໄລສຳລັບປີ		(42,365,244,926)	(5,966,392,567)
ປັບປຸງເພື່ອສົມທຽບຂາດທຶນສຸດທິກັບເງິນສົດສຸດທິ			
ຄ່າຫຼ້ຍຫ້ຽນ ແລະ ຄ່າເຊື່ອມມູນຄ່າ	20	5,145,540,875	5,662,299,920
ກຳໄລຈາກການສະສາງຊັບສິນ		-	(500,327,103)
(ເກັບຄືນ)/ຫັກເພີ່ມສຳລັບຄ້າງແຮ ຄ່າເຊື່ອມໜີ້ສິງໄສຈະສູນ		(129,583,727)	189,667,097
ລາຍຮັບດອກເບ້ຍ	19	(10,547,955,474)	(9,086,392,733)
ລາຍຈ່າຍດອກເບ້ຍ		65,990,517,545	50,585,808,240
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງເງິນທຶນໝຸນວຽນ		**18,093,274,293**	**40,884,662,856**
ການປ່ຽນແປງໃນການດຳເນີນງານ:			
ໜີ້ຕ້ອງຮັບທາງການຄ້າ		(1,850,440,949)	(3,276,852,540)
ສິນຄ້າໃນສາງ		(401,644,713)	(93,324,730)
ໜີ້ຕ້ອງສົ່ງທາງການຄ້າ		(565,250,597)	2,469,944,735
ໜີ້ຕ້ອງສົ່ງອາກອນ		(1,369,870,059)	4,865,891,187
ຊັບສິນບໍ່ໝຸນວຽນອື່ນໆ		(1,257,672,189)	(369,600,290)
ຊັບສິນໝຸນວຽນອື່ນໆ		89,067,364,276	(363,555,686,102)
ໜີ້ສິນໝຸນວຽນອື່ນໆ		85,322,588,769	310,016,730,598
ເງິນສົດທີ່ເກີດຈາກ/(ໃຊ້ໃນ)ການດຳເນີນງານ		**187,038,348,831**	**(9,058,234,286)**
ດອກເບ້ຍທີ່ໄດ້ຮັບ		647,322,182	1,412,356,698
ດອກເບ້ຍທີ່ໄດ້ຈ່າຍ		(63,576,680,002)	(87,049,499,263)
ອາກອນອື່ນໆ ແລະ ອາກອນຈ່າຍຕາມລະບຽບການ		(2,100,000,000)	(3,490,270,359)
ເງິນສົດສຸດທິທີ່ເກີດຈາກ/(ໃຊ້ໃນ)ກິດຈະກຳການດຳເນີນງານ		**122,008,991,011**	**(98,185,647,210)**
ກະແສເງິນສົດຈາກກິດຈະກຳການລົງທຶນ:			
ການໄດ້ມາຂອງຊັບສິນ		(4,433,275,126)	(6,295,526,247)
ສະສາງຊັບສິນ		-	961,317,103
ເງິນໃຫ້ກູ້ຢືມທີ່ໄດ້ຮັບໃນລະຫວ່າງປີ	23.5	12,421,000,000	289,130,025
ເງິນສົດສຸດທິທີ່ເກີດຈາກ/(ໃຊ້ໃນ)ກິດຈະກຳການລົງທຶນ		**7,987,724,874**	**(5,045,079,119)**

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການ

ວັນທີ: 25 ເມສາ 2024

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 25 ເມສາ 2024

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າ 12 ເຖິງ 32 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບທ້າຍປີສິ້ນສຸດ ວັນທີ 31 ທັນວາ 2023

	ບິດ ອະທິບາຍ	2023 ກີບ	2022 ກີບ
ກະແສເງິນສົດຈາກ ກິດຈະກຳການເງິນ:			
ເງິນກູ້ຢືມທີ່ໄດ້ຮັບ	14	663,206,782,957	686,779,240,463
ເງິນກູ້ຢືມທີ່ໄດ້ຊຳລະ	14	(794,034,232,000)	(579,193,592,000)
ເງິນສົດສຸດທິ(ໃຊ້ໃນ)/ເກີດຈາກກິດຈະກາການເງິນ		**(130,827,449,043)**	**107,585,648,463**
(ຫຼຸດລົງ)/ເພີ່ມຂຶ້ນ ສຸດທິໃນເງິນສົດ ແລະ ລາຍການ ທຽບເທົ່າເງິນສົດ		(830,733,158)	4,354,922,134
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນປີ	3	5,494,674,970	941,053,632
ກຳໄລຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການ ທຽບເທົ່າເງິນສົດ		148,246,612	198,699,204
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ສຳລັບທ້າຍປີ		**4,812,188,424**	**5,494,674,970**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ:			
ບັນຊີໜີ້ຕ້ອງສົ່ງ ສຳລັບຊັບສິນ		-	(871,129,494)

ທ່ານ ຄຳສອນ ສິດທິໄຊ
ຮອງຜູ້ອຳນວຍການ

ວັນທີ: 25 ເມສາ 2024

ທ່ານ ນາງ ຈັນທະດອນ ເມກສະຫວັນ
ຫົວໜ້າຝ່າຍບັນຊີ - ການເງິນ

ວັນທີ: 25 ເມສາ 2024

1. ຂໍ້ມູນທົ່ວໄປ

ບໍລິສັດ ປີໂຕຣລັງມເທຣດດິ້ງ ລາວ ມະຫາຊົນ (ບໍລິສັດ) ເປັນ ບໍລິສັດ ຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ແລະ ສ້າງຕັ້ງຂຶ້ນໃນ ສປປ ລາວ, ແມ່ນບໍລິສັດໄດ້ດຳເນີນທຸລະກິດ ແລະ ໄດ້ຈົດທະບຽນກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 3 ຕຸລາ 2008.

ສຳນັກງານໃຫຍ່ຂອງ ບໍລິສັດ ຕັ້ງຢູ່ ຖະໜົນກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ບໍລິສັດ ໄດ້ຖືຮຸ້ນ 99% ໃນ ບໍລິສັດ ປີໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ ແລະ ບໍລິສັດ ປີໂຕຣເທຣດ ດິສທະບິວຊັນ ຈຳກັດ ຕາມລຳດັບ.

ກິດຈະກຳຫຼັກຂອງ ບໍລິສັດ ແມ່ນເປັນບໍລິສັດຖືຮຸ້ນ ແລະ ໃຫ້ບໍລິການບັດເຕີມນ້ຳມັນ (Plus Card).

ເອກະສານລາຍການເງິນ ສະບັບນີ້ ໄດ້ຮັບການເຊັນອະນຸມັດ ໂດຍສະພາຜູ້ອຳນວຍການໃນວັນທີ 25 ເມສາ 2024.

2. ນະໂຍບາຍການບັນຊີ

ນະໂຍບາຍການບັນຊີ ໄດ້ຖືກຮັບຮອງນຳໃຊ້ເຂົ້າໃນການສ້າງເອກະສານລາຍງານການເງິນ ໄດ້ກຳນົດໄວ້ ດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນ ພາຍໃຕ້ມູນຄ່າເດີມ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ຂອງບໍລິສັດ ດັ່ງທີ່ໄດ້ອະທິບາຍໄວ້ຂ້າງລຸ່ມ ຂອງເອກະສານລາຍງານການເງິນ ສະບັບນີ້ ແລະ ໄດ້ສ້າງຂຶ້ນໂດຍໃຊ້ເກນລາຄາຕົ້ນທຶນເດີມໃນການວັດມູນຄ່າຂອງອົງປະກອບຂອງເອກະສານລາຍງານການເງິນ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ (IFRS), ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ PIEs ໃນການຈັດການເຮັດແຜນປະຕິບັດການ ສຳລັບການນຳ IFRS ເຖິງວັນທີ 31 ທັນວາ 2025, ດັ່ງນັ້ນ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບຕ້ອງປະຕິບັດ IFRS ຢ່າງເຕັມຮູບແບບໃນວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ໃນຂະນະນີ້ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ. ດັ່ງນັ້ນ, ຫຼັກການບັນຊີທີ່ນຳໃຊ້ອາດຈະແຕກຕ່າງຈາກ IFRS.

ການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຝ່າຍບໍລິຫານ ຕ້ອງມີການຄາດຄະເນ ແລະ ກຳນົດຂໍ້ສົມມຸດຖານຫຼາຍປະການ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນ ຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຄາດຄະເນປະຕິບັດດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ເຊິ່ງສາລະສຳຄັນຂອງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນຢ່າງເປັນສາລະສຳຄັນ.

ບໍລິສັດເປີດເຜີຍ ເອກະສານລາຍການເງິນແຍກກິດຈະການ ສຳລັບປີສິ້ນສຸດວັນທີ 31 ທັນວາ 2023 ແລະ 2022, ການລາຍງານ ແລະ ການເປີດເຜີຍນີ້ແມ່ນເປັນໄປຕາມກົດລະບຽບສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014 ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

2. ນະໂຍບາຍການບັນຊີ (ຕໍ່)

2.2 ເງິນລົງທຶນໃນບໍລິສັດໃນເຄືອ

ບໍລິສັດໃນເຄືອ ເປັນກິດຈະການທັງໝົດ (ລວມເຖິງໂຄງສ້າງຕ່າງໆ) ເຊິ່ງບໍລິສັດ ມີສິດອຳນາດໃນການຄວບຄຸມກິດຈະການ.

ບໍລິສັດໃນເຄືອ ໝາຍເຖິງກິດຈະການທີ່ບໍລິສັດ ຄວບຄຸມ, ບໍລິສັດ ມີອຳນາດຄວບຄຸມກິດຈະການເມື່ອ ບໍລິສັດ ຮັບ ຫຼື ມີສິດໃນຜົນຕອບແທນຜັນປ່ຽນ ກ່ຽວຂ້ອງກັບຜູ້ໄດ້ຮັບການລົງທຶນ ແລະ ມີຄວາມສາມາດໃຊ້ອຳນາດເໜືອຜູ້ໄດ້ຮັບການການລົງທຶນ ເພື່ອໃຫ້ໄດ້ຜົນຕອບແທນຜັນປ່ຽນ ບໍລິສັດ ລວມເອກະສານລາຍງານການເງິນຂອງບໍລິສັດໃນເຄືອ ໄວ້ໃນເອກະສານລາຍການເງິນສັງລວມກິດຈະການ ຕັ້ງແຕ່ວັນທີ ບໍລິສັດມີອຳນາດໃນການຄວບຄຸມບໍລິສັດໃນເຄືອຈົນເຖິງວັນທີ ບໍລິສັດ ສູນເສຍອຳນາດການຄວບຄຸມໃນບໍລິສັດໃນເຄືອນັ້ນ.

ໃນເອກະສານລາຍການເງິນ, ເງິນລົງທຶນໃນບໍລິສັດໃນເຄືອ ບັນທຶກບັນຊີໂດຍຖືປະຕິບັດຕາມລາຄາຕົ້ນທຶນຫັກຄ່າໃຊ້ຈ່າຍຈາກການສູນເສຍມູນຄ່າ.

2.3 ການຕີມູນຄ່າເງິນຕາຕ່າງປະເທດ

ບັນດາລາຍການທີ່ສະແດງໃນແຕ່ລະລາຍການຂອງ ເອກະສານລາຍງານການເງິນໄດ້ຖືກນຳສະເໜີດ້ວຍສະກຸນເງິນກີບ.

ລາຍການທີ່ເປັນສະກຸນເງິນຕາຕ່າງປະເທດໄດ້ຖືກຕີມູນຄ່າເປັນສະກຸນເງິນກີບ ດ້ວຍການນຳໃຊ້ອັດຕາແລກປ່ຽນໃນມື້ລາຍການດັ່ງກ່າວເກີດຂຶ້ນ.

ຊັບສິນ ແລະ ໜີ້ສິນ ທີ່ສາມາດປ່ຽນເປັນເງິນ ເຊິ່ງເປັນສະກຸນເງິນຕາຕ່າງປະເທດ ທີ່ຍັງເຫຼືອໃນທ້າຍປີ ໄດ້ຖືກຕີມູນຄ່າເປັນສະກຸນເງິນກີບໂດຍນຳໃຊ້ອັດຕາແລກປ່ຽນໃນທ້າຍປີ. ຜົນຕ່າງກຳໄລ ແລະ ຂາດທຶນ ທັງໝົດຈາກການແປງຄ່າທີ່ຍັງບໍ່ເກີດຂຶ້ນຈິງ ແມ່ນຖືກຮັບຮູ້ໃນໃບລາຍງານຖານະການເງິນ ແລະ ຈະຖືກດັດປັບລາຍການ ໃນປີຕໍ່ໄປ.

ກຳໄລ ຫຼື ຂາດທຶນ ຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈິງຈະຖືກຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບ ເມື່ອມີການຊຳລະ.

ອັດຕາແລກປ່ຽນທີ່ໃຊ້ແມ່ນມາຈາກທະນາຄານທີ່ມີຊື່ສຽງໃນທ້ອງຖິ່ນ ຂອງ ສປປ ລາວ.

2.4 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ປະກອບດ້ວຍ: ເງິນສົດຢູ່ໃນມື, ເງິນຝາກ ຢູ່ໃນທະນາຄານ ຫຼື ສະຖາບັນການເງິນອື່ນໆ ໄລຍະສັ້ນ ມີສະພາບຄ່ອງໃນການລົງທຶນສູງ ໃນໄລຍະເວລາສາມເດືອນ ຫຼື ໜ້ອຍກວ່າ.

2.5 ໜີ້ຕ້ອງຮັບທາງການຄ້າ

ໜີ້ຕ້ອງຮັບທາງການຄ້າ ຮັບຮູ້ຕາມມູນຄ່າໃບເກັບເງິນຕົ້ນສະບັບ ແລະ ຕີມູນຄ່າຄືນໃໝ່ໂດຍໃຊ້ມູນຄ່າຍັງເຫຼືອຫັກ ສຳຮອງໜີ້ຕ້ອງຮັບທວງຍາກຕາມມູນຄ່າເຫຼືອ ຕາມບັນຊີທ້າຍປີ. ສຳຮອງໜີ້ຕ້ອງຮັບທວງຍາກ ແມ່ນສ່ວນຜິດດ່ຽງລະຫວ່າງ ມູນຄ່າຍັງເຫຼືອໃນບັນຊີຂອງ ໜີ້ຕ້ອງຮັບ ແລະ ຈຳນວນເງິນທີ່ຄາດວ່າຈະເກັບກູ້ຄືນໄດ້. ສຳລັບໜີ້ສູນຈະໄດ້ສະສາງອອກ ຈາກບັນຊີໃນປີ ແລະ ຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບ ໃນສ່ວນຂອງລາຍຈ່າຍບໍລິຫານ.

2. ນະໂຍບາຍການບັນຊີ (ຕໍ່)

2.5 ໜີ້ຕ້ອງຮັບທາງການຄ້າ (ຕໍ່)

ນະໂຍບາຍການຕັ້ງສຳຮອງໜີ້ທວງຍາກສຳລັບໜີ້ຕ້ອງຮັບຈາກບໍລິສັດອື່ນມີດັ່ງລຸ່ມນີ້:

ຈາກ 6 ເດືອນ ເຖິງ 1 ປີ	30%
ຈາກ 1 ປີ ເຖິງ 2 ປີ	50%
2 ປີຂຶ້ນໄປ	100%

ບໍລິສັດ ບໍ່ມີນະໂຍບາຍການຕັ້ງສຳຮອງໜີ້ທວງຍາກສຳລັບ ບໍລິສັດ ທີ່ກ່ຽວຂ້ອງ ເຊິ່ງລວມເຖິງເງິນໃຫ້ກູ້ຢືມ, ໜີ້ຕ້ອງຮັບ ແລະ ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ແລະ ໜີ້ຕ້ອງຮັບຈາກການໃຫ້ບໍລິການແກ່ໂຄງການຂອງລັດຖະບານ.

2.6 ເຄື່ອງໃນສາງ

ເຄື່ອງໃນສາງ ໄດ້ຖືກສະແດງ ໃນລາຄາຕົ້ນທຶນ ຫຼື ໃນມູນຄ່າຂາຍອອກໄດ້ສຸດທິທີ່ຕ່ຳກວ່າ, ເຊິ່ງຕົ້ນທຶນຂອງເຄື່ອງໃນສາງ ໄດ້ຖືກກຳນົດໂດຍ ວິທີສະເລ່ຍຖ່ວງນ້ຳໜັກ. ຕົ້ນທຶນໃນການຊື້ເຄື່ອງໃນສາງ ປະກອບດ້ວຍ ລາຄາຊື້ ແລະ ຕົ້ນທຶນຄ່າໃຊ້ຈ່າຍ ທາງກົງທີ່ເກີດຈາກການຊື້ເຄື່ອງໃນສາງ ເຊັ່ນ: ພາສີນຳເຂົ້າ ແລະ ຄ່າໃຊ້ຈ່າຍການຂົນສົ່ງ, ຫັກບັນດາສ່ວນຫຼຸດ, ເງິນແຮ ຫຼື ການ ສົ່ງຄືນ. ຕົ້ນທຶນຂອງສິນຄ້າສຳເລັດຮູບ ປະກອບດ້ວຍ: ຕົ້ນທຶນການອອກແບບ, ວັດຖຸດິບ, ຄ່າແຮງງານທາງກົງອື່ນໆ ແລະ ສ່ວນເກີນການຜະລິດທີ່ກ່ຽວຂ້ອງກັບກຳລັງການຜະລິດ, ບໍ່ລວມຕົ້ນທຶນການກູ້ຢືມ. ມູນຄ່າສຸດທິ ທີ່ຈະໄດ້ຮັບ ໝາຍເຖິງ ການປະເມີນລາຄາຂາຍ ໃນຊ່ວງເວລາປົກກະຕິຂອງການດຳເນີນທຸລະກິດ, ລົບໃຫ້ຕົ້ນທຶນລວມ ແລະ ຄ່າໃຊ້ຈ່າຍໃນການ ຂາຍເຄື່ອງໃນສາງ. ສ່ວນຫຼຸດມູນຄ່າອາດຈະເກີດຂຶ້ນໄດ້ໃນກໍລະນີທີ່ມີເຫດການສະເພາະ ເຊັ່ນ: ເມື່ອເຄື່ອງໃນສາງພົ້ນສະໄໝ, ຮອບວຽນຂາຍຊ້າ ແລະ ສິນຄ້າເສຍຫາຍ.

2.7 ຊັບສິນເພື່ອການລົງທຶນ

ຊັບສິນທີ່ຖືຄອງໂດຍບໍລິສັດ ເພື່ອຫາປະໂຫຍດຈາກລາຍຮັບຄ່າເຊົ່າ ຫຼື ຈາກການເພີ່ມຂຶ້ນຂອງມູນຄ່າຂອງຊັບສິນ ຫຼື ທັງສອງ ຢ່າງ ແລະ ບໍ່ໄດ້ມີໄວ້ໃນງານໂດຍກິດຈະການໃນບໍລິສັດ ຈະຖືກຈັດປະເພດເປັນ ຊັບສິນ ເພື່ອການລົງທຶນ ລວມເຖິງຊັບສິນ ທີ່ຢູ່ລະຫວ່າງກໍ່ສ້າງ ຫຼື ພັດທະນາ ເພື່ອເປັນຊັບສິນ ເພື່ອການລົງທຶນໃນອະນາຄົດ.

ທີ່ດິນຈະຖືກບັນທຶກເປັນຊັບສິນ ເພື່ອການລົງທຶນຂອງບໍລິສັດ ຊັບສິນດັ່ງກ່າວ ຖືກນຳໃຊ້ເຂົ້າໃນການລົງທຶນໄປແລ້ວ.

ຊັບສິນເພື່ອການລົງທຶນ ຈະບັນທຶກເບື້ອງຕົ້ນໂດຍລາຄາທຶນໂດຍລວມຕົ້ນທຶນທີ່ກ່ຽວຂ້ອງສຳລັບການໄດ້ມາຂອງຊັບສິນເພື່ອ ການລົງທຶນ. ຍົກເວັ້ນທີ່ດິນ, ທີ່ດິນທີ່ຖືກຈັດປະເພດເປັນຊັບສິນເພື່ອການລົງທຶນ ແມ່ນຖືກຮັບຮູ້ໂດຍໃຊ້ວິທີການປະເມີນ ມູນຄ່າຄືນໃຫມ່ (ບົດອະທິບາຍ ຂໍ້ທີ 2.8).

ຕົ້ນທຶນທີ່ເກີດຂຶ້ນພາຍຫຼັງຈາກການໄດ້ມາຈະຖືກບັນທຶກເປັນຕົ້ນທຶນຂອງຊັບສິນ ເພື່ອການລົງທຶນເມື່ອມີຄວາມເປັນໄປໄດ້ ວ່າ ຈະເກີດຜົນປະໂຫຍດດ້ານເສດຖະກິດໃນອະນາຄົດເຂົ້າສູ່ບໍລິສັດ ແລະ ສາມາດປະມານການໄດ້ຢ່າງໜ້າເຊື່ອຖື ຕົ້ນທຶນ ການສ້ອມແປງຈະຖືກບັນທຶກເປັນລາຍຈ່າຍເມື່ອເກີດຂຶ້ນ ເມື່ອມີການປ່ຽນສ່ວນປະກອບຂອງຊັບສິນເພື່ອການລົງທຶນ ສ່ວນປະກອບນັ້ນ ຈະຖືກລ້າງມູນຄ່າອອກຈາກບັນຊີ.

ຫຼັງຈາກການຮັບຮູ້ຕົ້ນທຶນ ຊັບສິນໃນການລົງທຶນໃນເບື້ອງຕົ້ນ, ຊັບສິນດັ່ງກ່າວຕ້ອງໄດ້ຖືກ ຫັກ ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເຊື່ອມສະສົມ.

2. ນະໂຍບາຍການບັນຊີ (ຕໍ່)

2.7 ຊັບສິນເພື່ອການລົງທຶນ (ຕໍ່)

ທີ່ດິນບໍ່ໄດ້ຫັກຄ່າຫຼ້ຍຫ້ຽນ (ບົດອະທິບາຍຂໍ້ 2.8), ຄ່າຫຼ້ຍຫ້ຽນຂອງຊັບສິນເພື່ອການລົງທຶນຈະຄິດໄລ່ຫັກຄ່າຫຼ້ຍຫ້ຽນໂດຍໃຊ້ ມູນຄ່າຫຼັງຫັກລາຄາທີ່ຄາດວ່າຈະຂາຍໄດ້ ໂດຍວິທີແບບສະໝ່ຳສະເໝີຕາມອາຍຸການໃຊ້ງານທີ່ຄາດຄະເນຂອງແຕ່ລະລາຍການຊັບສິນດັ່ງຕໍ່ໄປນີ້:

ອາຄານ ແລະ ການປັບປຸງ	7 - 10 ປີ

2.8 ຊັບສິນຄົງທີ່ມີຕົວຕົນ

ລາຍການຂອງຊັບສິນຄົງທີ່ມີຕົວຕົນຍົກເວັ້ນທີ່ດິນ* ໄດ້ຖືກບັນທຶກບັນຊີຕາມມູນຄ່າຕົ້ນທຶນເດີມ ຫັກຄ່າຫຼ້ຍຫ້ຽນສະສົມ, ມູນຄ່າຕົ້ນທຶນເດີມ ແມ່ນລວມມີລາຍຈ່າຍທີ່ກ່ຽວຂ້ອງໂດຍກົງ ຂອງຊັບສິນນັ້ນ.

*ທີ່ດິນຈະຖືກຮັບຮູ້ໃນວິທີການປະເມີນມູນຄ່າຄືນໃຫມ່ໂດຍອີງໃສ່ໄລຍະເວລາ, ແຕ່ຢ່າງຫນ້ອຍ 2 ປີ, ການປະເມີນມູນຄ່າແມ່ນຕ້ອງໂດຍຜູ້ປະເມີນເອກະລາດພາຍນອກ. ການເພີ່ມຂຶ້ນ/ຫຼຸດລົງຂອງມູນຄ່າຕາມບັນຊີທີ່ເກີດຈາກການປະເມີນມູນຄ່າທີ່ດິນຄືນໃໝ່ແມ່ນຖືກບັນທຶກໃນ "ສ່ວນເພີ່ມຈາກການຕີມູນຄ່າຊັບສິນຄືນໃຫມ່" ໃນສ່ວນຂອງຜູ້ຖືຫຸ້ນ. ຈຳນວນຊັບສິນທີ່ຖືກສະສາງຈາກສ່ວນເພີ່ມການຕີມູນຄ່າຊັບສິນຄືນໃຫມ່ ບໍລິສັດ ຈະບັນທຶກໄວ້ກຳໄລສະສົມໄວ້ ເມື່ອຊັບສິນທີ່ຕີມູນຄ່າຄືນນັ້ນໄດ້ຖືກຂາຍ.

ຕົ້ນທຶນທີ່ເກີດຂຶ້ນພາຍຫຼັງຈາກການໄດ້ມາຈະຖືກບັນທຶກລວມເປັນຕົ້ນທຶນຂອງຊັບສິນນັ້ນ ຫຼື ແຍກບັນທຶກເມື່ອມີຄວາມເປັນໄປໄດ້ວ່າຈະເກີດຜົນປະໂຫຍດດ້ານເສດຖະກິດໃນອະນາຄົດເຂົ້າສູ່ ບໍລິສັດ ແລະ ສາມາດປະມານການໄດ້ຢ່າງໜ້າເຊື່ອຖື, ຕົ້ນທຶນການສ້ອມແປງຈະຖືກບັນເປັນລາຍຈ່າຍເມື່ອເກີດຂຶ້ນ ເມື່ອມີການປ່ຽນສ່ວນປະກອບຂອງຊັບສິນ ສ່ວນປະກອບນັ້ນ ຈະຖືກລ້າງມູນຄ່າອອກຈາກບັນຊີ.

ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາແມ່ນໄດ້ບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບໃນລະຫວ່າງ ໄລຍະການເງິນທີ່ເກີດຂຶ້ນ, ທີ່ດິນແມ່ນບໍ່ມີຄ່າຫຼ້ຍຫ້ຽນ, ການຫັກຄ່າຫຼ້ຍຫ້ຽນຊັບສິນຄົງທີ່ມີຕົວຕົນ ຈະໃຊ້ວິທີສະເລ່ຍ ບົນພື້ນຖານ ອາຍຸການໃຊ້ງານຄາດຄະເນຂອງແຕ່ລະລາຍການຊັບສິນ ດັ່ງຕໍ່ໄປນີ້:

ອາມຄານ ແລະ ການປັບປຸງອາຄານ	5 - 30 ປີ
ເຄື່ອງຈັກ ແລະ ອຸປະກອນຕ່າງໆ	2 - 10 ປີ
ພາຫະນະ	5 ປີ
ເຄື່ອງໃຊ້ສຳນັກງານ	2-10 ປີ

ກຳໄລ ແລະ ຂາດທຶນ ຈາກການຂາຍຊັບສິນຄົງທີ່ໄດ້ຖືກກຳນົດໂດຍການສົມທຽບລາຄາຂາຍ ກັບ ມູນຄ່າຕາມບັນຊີ ແລະ ຈົດເພີ່ມເຂົ້າໃນຜົນໄດ້ຮັບຈາກການດຳເນີນງານຂອງ ບໍລິສັດ.

2. ນະໂຍບາຍການບັນຊີ (ຕໍ່)

2.9 ຊັບສິນຄົງທີ່ບໍ່ມີຕົວຕົນ

ຊັບສິນຄົງທີ່ບໍ່ມີຕົວຕົນແມ່ນປະກອບມີ ໂປຣແກຣມຄອມພິວເຕີ, ການຊື້ລິຂະສິດໃນການນຳໃຊ້ໂປຣແກຣມຄອມພິວເຕີ ໄດ້ຈັດເປັນມູນຄ່າຊັບສິນຄົງທີ່ ບົນພື້ນຖານຄ່າໃຊ້ຈ່າຍທີ່ເກີດຂຶ້ນ ຈາກການຊື້ ແລະ ການສົ່ງ-ມອບ ຈົນກຽມພ້ອມໃຊ້ງານ, ຄ່າໃຊ້ຈ່າຍເຫຼົ່ານີ້ຖືກຫັກເປັນຄ່າໃຊ້ຈ່າຍ ຕະຫຼອດອາຍຸການໃຊ້ງານ, ເຊິ່ງບໍ່ເກີນ 2-10 ປີ, ຕົ້ນທຶນທີ່ກ່ຽວຂ້ອງກັບ ໂປຣແກຣມຄອມພິວເຕີສ່ວນທີ່ເຫຼືອຈະບັນທຶກເປັນລາຍຈ່າຍເມື່ອເກີດຂຶ້ນຈິງ.

2.10 ເງິນກູ້ຢືມ

ເງິນກູ້ຢືມ ແມ່ນຮັບຮູ້ຕາມຈຳນວນເງິນທີ່ໄດ້ຮັບ ຕົ້ນທຶນຂອງເງິນກູ້ຢືມເຊິ່ງປະກອບມີດອກເບ້ຍຈ່າຍ ແລະ ຕົ້ນທຶນທາງ ກົງອື່ນໆທີ່ບໍລິສັດໄດ້ຈ່າຍໄປເພື່ອການກູ້ຢືມເງິນ. ຕົ້ນທຶນການກູ້ຢືມເງິນທີ່ນຳໃຊ້ທົ່ວໄປຈະຖືກບັນທຶກເປັນລາຍຈ່າຍ ໃນລະຫວ່າງປີທີ່ເກີດຂຶ້ນ.

ຕົ້ນທຶນການກູ້ຢືມເກີດຂຶ້ນ ແລະ ກ່ຽວຂ້ອງໂດຍກົງກັບການຈັດຫາ ການກໍ່ສ້າງໃນຊ່ວງໄລຍະເວລາກໍ່ສ້າງ ຈົນສ້າງແລ້ວ ສຳເລັດ ພ້ອມໃຊ້ງານ ຈະຖືກບັນທຶກເປັນຕົ້ນທຶນຂອງຊັບສິນນັ້ນ.

ຕົ້ນທຶນຄ່າຈັດການເງິນກູ້ຢືມ ຈະບັນທຶກເປັນລາຍຈ່າຍລ່ວງໜ້າ ແລະ ຕັດຈ່າຍເຂົ້າໃນໃນລາຍງານຜົນໄດ້ຮັບຕາມອາຍຸ ສັນຍາການກູ້ຢືມ.

ເງິນກູ້ຢືມ ໄດ້ຖືກຈຳແນກໃຫ້ເປັນໜີ້ໝຸນວຽນ ຍົກເວັ້ນໃນກໍລະນີທີ່ ບໍລິສັດ ໄດ້ຮັບສິດໃນການການຊຳລະໜີ້ ຂອງໜີ້ສິນ ທັງໝົດ ຢ່າງຕ່ຳເປັນເວລາ 12 ເດືອນ ພາຍຫຼັງວັນທີ ຂອງປົດລາຍງານ.

2.11 ສັນຍາເຊົ່າ

ສັນຍາເຊົ່າ ທີ່ບໍລິສັດເປັນຜູ້ເຊົ່າ

ສັນຍາເຊົ່າ ທີ່ບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນໃຫ້ແກ່ຜູ້ເຊົ່າ ເຊິ່ງຈຳແນກສັນຍາເຊົ່າດັ່ງກ່າວ ເປັນສັນຍາເຊົ່າ ປົກກະຕິໃນການດຳເນີນທຸລະກິດ ລາຍຈ່າຍພາຍໃຕ້ສັນຍາເຊົ່າ (ລວມທຸກລາຍການ ທີ່ໄດ້ຮັບຈາກຜູ້ໃຫ້ເຊົ່າ) ຖືກຈັດເປັນລາຍ ຈ່າຍໃນໃບລາຍງານຜົນໄດ້ຮັບ ແບບສະເລ່ຍຕາມອາຍຸການຂອງສັນຍາເຊົ່າ.

ເມື່ອສັນຍາເຊົ່າ ມີການຍົກເລີກສັນຍາກ່ອນໝົດອາຍຸການເຊົ່າ, ຈຳນວນເງິນຄ່າເຊົ່າ ແລະ ຄ່າໃຊ້ຈ່າຍອື່ນໆ ຈະຕົກເປັນຂອງຜູ້ໃຫ້ ເຊົ່າໃນຮູບແບບການປັບໃໝ ແລະ ຮັບຮູ້ເປັນຄ່າໃຊ້ຈ່າຍໃນຮອບເວລາທີ່ມີການຍົກເລີກສັນຍາດັ່ງກ່າວ.

ສັນຍາເຊົ່າທີ່ດິນ ອາຄານ ແລະ ອຸປະກອນ ເຊິ່ງຜູ້ເຊົ່າເປັນຜູ້ຮັບຄວາມສ່ຽງ ແລະ ຜົນຕອບແທນຂອງຄວາມເປັນເຈົ້າຂອງ ເກືອບທັງໝົດ ຄືເປັນສັນຍາເຊົ່າການເງິນ ຊຶ່ງຈະບັນທຶກເປັນລາຍຈ່າຍຝ່າຍທຶນດ້ວຍມູນຄ່າຍຸດຕິທຳຂອງຊັບສິນທີ່ເຊົ່າ ຫຼື ມູນ ຄ່າປະຈຸບັນສຸດທິ ຂອງຈຳນວນເງິນທີ່ຕ້ອງຈ່າຍຕາມສັນຍາເຊົ່າ ແລະ ແຕ່ມູນຄ່າໃດຈະຕ່ຳກວ່າ.

ຈຳນວນເງິນທີ່ຕ້ອງຈ່າຍດັ່ງກ່າວຈະຖືກແບ່ງອອກລະຫວ່າງໜີ້ສິນ ແລະ ລາຍຈ່າຍທາງການເງິນ ເພື່ອໃຫ້ໄດ້ອັດຕາດອກເບ້ຍຄົງທີ່ຕ່ຳ ໜີ້ສິນຄ້າງຈ່າຍ ໂດຍພິຈາລະນາແຍກແຕ່ລະສັນຍາ ພາລະຜູກພັນຕາມສັນຍາເຊົ່າຫັກລາຍຈ່າຍທາງການເງິນ ຈະບັນທຶກເປັນ ໜີ້ສິນໄລຍະຍາວ ສ່ວນດອກເບ້ຍຈ່າຍຈະບັນທຶກໃນໃບລາຍງານຜົນໄດ້ຮັບຕະຫຼອດອາຍຸຂອງສັນຍາເຊົ່າ ເພື່ອເຮັດໃຫ້ອັດຕາ ດອກເບ້ຍແຕ່ລະງວດເປັນອັດຕາດອກເບ້ຍຄົງທີ່ ສຳລັບຍອດເຫຼືອຂອງໜີ້ສິນທີ່ເຫຼືອຢູ່ ຊັບສິນທີ່ໄດ້ມາຕາມສັນຍາເຊົ່າການ ເງິນຈະຄິດໄລ່ຄ່າຫລ້ຽຫ້ຽນຕະຫຼອດອາຍຸການໃຊ້ງານຂອງຊັບສິນທີ່ເຊົ່າ ຫຼື ອາຍຸຂອງສັນຍາເຊົ່າ ແລ້ວແຕ່ໄລຍະເວລາໃດຈະ ໜ້ອຍກວ່າ.

2. ນະໂຍບາຍການບັນຊີ (ຕໍ່)

2.11 ສັນຍາເຊົ່າ (ຕໍ່)

ສັນຍາເຊົ່າ ທີ່ທາງບໍລິສັດເປັນຜູ້ໃຫ້ເຊົ່າ

ຊັບສິນທີ່ທາງ ບໍລິສັດໃຫ້ເຊົ່າ ພາຍໃຕ້ສັນຍາເຊົ່າໃນການດຳເນີນທຸລະກິດ ຖືກຮັບຮູ້ເປັນຊັບສິນຄົງທີ່ມີຕົວຕົນໃນໃບສະຫຼຸບຊັບສິນບັດ ແລະ ຖືກຫັກຄ່າຫຼ້ຽຍຫ້ຽນຕາມອາຍຸການນຳໃຊ້ທີ່ໄດ້ຄາດຄະເນໄວ້ ລາຍຮັບຈາກຄ່າເຊົ່າ (ລວມທຸກລາຍການ ທີ່ໄດ້ມອບໃຫ້ຜູ້ເຊົ່າ) ຖືກຮັບຮູ້ ແບບສະເລ່ຍ ຕາມອາຍຸການຂອງສັນຍາເຊົ່າດັ່ງກ່າວ.

2.12 ອາກອນກຳໄລ

ບໍລິສັດ ບັນທຶກອາກອນລາຍຮັບ ຕາມຫຼັກເກນຄ້າງຮັບຄ້າງຈ່າຍ ຕາມກົດໝາຍສ່ວຍສາອາກອນລາວ. ບໍລິສັດ ບໍ່ໄດ້ບັນທຶກອາກອນລາຍຮັບທີ່ຄ້າງຈ່າຍ ຫຼື ຄ້າງຮັບ ໃນອະນາຄົດ ເຊິ່ງເກີດຈາກສ່ວນຜິດຕ່ຽງຊົ່ວຄາວ. ລາຍຈ່າຍອາກອນແມ່ນຮັບຮູ້ບົນພື້ນຖານຜົນການດຳເນີນງານໃນປີຫຼັງດັດແກ້ ທີ່ບໍ່ສາມາດຫັກລາຍຈ່າຍ ແລະ ລາຍການເຄື່ອນໄຫວອື່ນໆ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ອັດຕາອາກອນ. ພາຍໃຕ້ລະບຽບການບັນຊີ ແລະ ກົດໝາຍສ່ວຍສາອາກອນ ລາຍຈ່າຍອາກອນໃນປີແມ່ນໄດ້ຄິດໄລ່ຕາມພື້ນຖານລາຍຮັບຂອງບໍລິສັດ (ບົດອະທິບາຍ ຂໍ້ທີ 21).

ໃນ ສປປ ລາວ ອາກອນລາຍຮັບຕ້ອງໄດ້ຮັບການກວດກາລາຍລະອຽດຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ. ນອກຈາກນີ້, ຂໍ້ພິບເຫັນທີ່ເກີດຂຶ້ນຈາກການກວດກາຄືນດັ່ງກ່າວອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ບໍລິສັດ ແລະ ອາດສົ່ງຜົນໃຫ້ເກີດການຊຳລະອາກອນເພີ່ມເຕີມ ຫຼື ຮັບຄືນ ໃນກໍລະນີຈຳເປັນ ແລະ ສາລະສຳຄັນ. ເຊິ່ງອາດຈະມີຜົນໃນການຈ່າຍເງິນ ຫຼື ຮັບຄືນ ຂອງການຮັບຮູ້ລາຍຈ່າຍອາກອນລາຍຮັບພາຍໃນປີທີ່ມີການກວດກາໄດ້ສຳເລັດ.

2.13 ທຶນຈົດທະບຽນ

ຮຸ້ນສາມັນ ແລະ ຮຸ້ນບຸລິມະສິດແບບໄຖ່ຖອນຄືນບໍ່ໄດ້ ແຕ່ມີສິດໄດ້ຮັບເງິນປັນຜົນຈະຖືກຈັດປະເພດເປັນທຶນຂອງຂາຮຸ້ນ.

ສ່ວນເພີ່ມມູນຄ່າຮຸ້ນຈະຖືກບັນທຶກເມື່ອມີການອອກຈຳໜ່າຍຮຸ້ນ ຫຼື ມີການເພີ່ມຮຸ້ນ ໂດຍສະແດງຜົນຕ່າງຂອງລາຄາທີ່ສະເໜີຂາຍ ແລະ ລາຄາຕົ້ນທຶນທີ່ຈົດທະບຽນໄວ້ ຫຼັງຈາກຫັກ ຕົ້ນທຶນໃນການອອກຮຸ້ນ (ເຊັ່ນ: underwriting fees ລາຍຈ່າຍອື່ນໆ ທີ່ກ່ຽວກັບການກະເມີນມູນຄ່າ ແລະ ຄ່າທີ່ປຶກສາ).

ອີງຕາມຄູ່ມືແນະນຳການປະຕິບັດສະບັບເລກທີ 056/ຄຄຊ ອອກໂດຍ ຄຄຊ ລົງວັນທີ 28 ເມສາ 2015, ໂດຍອະນຸຍາດໃຫ້ບໍລິສັດ ສົ່ງຄືນສ່ວນເພີ່ມມູນຄ່າຮຸ້ນທີ່ເກີດຈາກການເຂົ້າຕະຫຼາດຄັ້ງທຳອິດ ຈຳນວນ 75% ຫຼັງຈາກໄດ້ຫັກຕົ້ນທຶນການອອກຮຸ້ນແລ້ວ, ໃຫ້ແກ່ຜູ້ຖືຮຸ້ນທີ່ເປັນຜູ້ສ້າງຕັ້ງ ບໍລິສັດ.

2.14 ການຮັບຮູ້ລາຍຮັບ

ລາຍຮັບໃນໃບເກັບເງິນຈາກການຂາຍສິນຄ້າສຸດທິຫຼັງຫັກສ່ວນຫຼຸດທີ່ໄດ້ຮັບ ແລະ ສ່ວນຫຼຸດຈາກການສັ່ງຊື້. ລາຍຮັບຈາກການຂາຍສິນຄ້າຮັບຮູ້ເມື່ອຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼື ຖືກສົ່ງໃຫ້ຜູ້ຊື້.

ລາຍຮັບຈາກການໃຫ້ບໍລິການແມ່ນຖືກຮັບຮູ້ໃນຮອບບັນຊີທີ່ໃຫ້ບໍລິການ.

ລາຍຮັບທີ່ມາຈາກການໃຫ້ເຊົ່າ ໄດ້ຖືກຮັບຮູ້ ແບບສະເລ່ຍຕະຫຼອດອາຍຸສັນຍາເຊົ່າ.

ລາຍຮັບອື່ນໆ ແມ່ນໄດ້ຮັບຮູ້ບົນພື້ນຖານ ດັ່ງລຸ່ມນີ້:

2. ນະໂຍບາຍການບັນຊີ (ຕໍ່)

2.14 ການຮັບຮູ້ລາຍຮັບ (ຕໍ່)

- ລາຍຮັບ ດອກເບ້ຍ ຮັບຮູ້ຕາມພື້ນຖານອັດຕາສ່ວນຂອງເວລາ ໃນສ່ວນຂອງຍອດໜີ້ຄ້າງຊຳລະ ແລະ ໃນອັດຕາ ດອກເບ້ຍ ຕາມສັນຍາຈົນເຖິງກຳນົດໄລຍະເວລາ ແລະ ລາຍຮັບດັ່ງກ່າວຈະຖືກຮັບຮູ້ເປັນລາຍຮັບຄ້າງຮັບເຂົ້າ ບໍລິສັດ.
- ລາຍຮັບອື່ນໆ ແມ່ນຮັບຮູ້ຕາມເກນຄ້າງຮັບຄ້າງຈ່າຍ.

3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	2023 ກີບ	2022 ກີບ
ເງິນສົດ	15,041,000	16,261,500
ເງິນຝາກໃນທະນາຄານ	4,797,147,424	5,478,413,470
	4,812,188,424	**5,494,674,970**

4. ໜີ້ຕ້ອງຮັບທາງການຄ້າ, ສຸດທິ

	2023 ກີບ	2022 ກີບ
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 23.3)	5,770,070,800	11,908,699,209
ໜີ້ຕ້ອງຮັບທາງການຄ້າ - ພາກສ່ວນທີສາມ	25,005,775,640	17,275,873,737
	30,775,846,440	**29,184,572,946**
ຫັກ:ສຳຮອງບັນຊີໜີ້ສົງໄສຈະເສຍ	(6,599,535,882)	(6,729,119,609)
ໜີ້ຕ້ອງຮັບທາງການຄ້າ-ສຸດທິ	**24,176,310,558**	**22,455,453,337**

5. ສິນຄ້າໃນສາງ, ສຸດທິ

	2023 ກີບ	2022 ກີບ
ເຄື່ອງໃຊ້ຫ້ອງການ	607,391,946	264,720,835
ບັດເຕີມນ້ຳມັນ Plus card	193,588,586	134,614,984
	800,980,532	**399,335,819**
ຫັກ: ສຳຮອງຄ່າເຊື່ອມມູນຄ່າຕາມມູນຄ່າສຸດທິ	-	-
ສິນຄ້າໃນສາງ-ສຸດທິ	**800,980,532**	**399,335,819**

6. ຊັບສິນໝຸນວຽນອື່ນໆ

	2023 ກີບ	2022 ກີບ
ໜີ້ຕ້ອງຮັບອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 23.3)	98,317,939,886	135,792,298,997
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ	1,643,284,876	1,590,654,288
ຈ່າຍລ່ວງໜ້າ	7,992,163,622	1,046,624,864
ເງິນຈ່າຍມັດຈຳໃຫ້ຜູ້ສະໜອງ	3,897,730,909	3,324,973,515
ເງິນຈ່າຍລ່ວງໜ້າໃຫ້ພະນັກງານ	65,000,000	85,000,000
ເງິນຈ່າຍລ່ວງໜ້າສຳລັບອາກອນກຳໄລ	1,146,854,492	1,146,854,492
ໜີ້ຕ້ອງຮັບດອກເບ້ຍ (ບົດອະທິບາຍຂໍ້ 23.3)	18,628,719,284	33,804,272,520
ໜີ້ຕ້ອງຮັບຈາກການປະກອບທຶນ (ບົດອະທິບາຍຂໍ້ 23.3)	36,368,330,104	36,368,330,104
ຂາດທຶນລໍຖ້າຕັດບັນຊີຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ	323,867,128,318	328,949,539,622
	491,927,151,491	**542,108,548,402**

7. ຊັບສິນບັດຄົງທີ່ມີຕົວຕົນ-ສຸດທິ

	ທີ່ດິນ ກີບ	ອາຄານ ແລະ ການປັບປຸງ ກີບ	ເຄື່ອງຈັກ ແລະ ອຸປະກອນ ກີບ	ເຄື່ອງໃຊ້ ຫ້ອງການ ກີບ	ຍານພາຫະນະ ກີບ	ຊັບສິນພວມກໍ່ສ້າງ ກີບ	ລວມ ກີບ
ວັນທີ 1 ມັງກອນ 2022							
ຕົ້ນທຶນ	313,679,870,278	67,588,903,626	5,939,493,233	19,733,466,754	3,941,507,344	7,954,205,432	418,837,446,667
ຫັກ: ຄ່າຫຼ້ຍຫ້ຽນສະສົມ	-	(21,106,856,142)	(5,434,541,579)	(16,317,367,775)	(3,941,507,344)	-	(46,800,272,840)
ມູນຄ່າຕາມບັນຊີສຸດທິ	**313,679,870,278**	**46,482,047,484**	**504,951,654**	**3,416,098,979**	-	**7,954,205,432**	**372,037,173,827**
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023							
ຍອດຍົກມາມູນຄ່າຕາມບັນຊີສຸດທິ	313,679,870,278	46,482,047,484	504,951,654	3,416,098,979	-	7,954,205,432	372,037,173,827
ເພີ່ມຂຶ້ນ	-	-	-	208,978,438	1,859,700,992	1,488,116,202	3,556,795,632
ຄ່າຫຼ້ຍຫ້ຽນ (ບົດອະທິບາຍ 20)	-	(2,534,473,890)	(284,769,714)	(811,080,466)	(11,718,665)	-	(3,642,042,735)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**313,679,870,278**	**43,947,573,594**	**220,181,940**	**2,813,996,951**	**1,847,982,327**	**9,442,321,634**	**371,951,926,724**
ວັນທີ 31 ທັນວາ 2023							
ຕົ້ນທຶນ	313,679,870,278	67,588,903,626	5,939,493,233	19,942,445,192	5,801,208,336	9,442,321,634	422,394,242,299
ຫັກ: ຄ່າຫຼ້ຍຫ້ຽນສະສົມ	-	(23,641,330,032)	(5,719,311,293)	(17,128,448,241)	(3,953,226,008)	-	(50,442,315,575)
ມູນຄ່າຕາມບັນຊີສຸດທິ	**313,679,870,278**	**43,947,573,594**	**220,181,940**	**2,813,996,951**	**1,847,982,327**	**9,442,321,634**	**371,951,926,724**

ທີ່ຊັບສິນຄົງທີ່ມີຕົວຕົນບາງລາຍການແມ່ນໄດ້ນຳໄປເປັນຫຼັກຊັບຄ້ຳປະກັນສຳລັບເງິນກູ້ຢືມ (ບົດອະທິບາຍຂໍ້ 14)

8. ຊັບສິນຄົງທີ່ ບໍ່ມີຕົວຕົນ-ສຸດທິ

	ໂປແກຼມຄອມພິວເຕີ ກີບ
ຍອດຍົກມາໃນວັນທີ1 ມັງກອນ 2023	
ຕົ້ນທຶນ	8,701,598,895
ຫັກ: ຄ່າເຊື່ອມມູນຄ່າສະສົມ	(5,805,405,531)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**2,896,193,364**
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2023	
ຍອດຍົກມາມູນຄ່າຕາມບັນຊີສຸດທິ	2,896,193,364
ເພີ່ມຂຶ້ນ	5,350,000
ຄ່າເຊື່ອມມູນຄ່າ (ບົດອະທິບາຍຂໍ້ 20)	(817,908,192)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**2,083,635,172**
ວັນທີ 31 ທັນວາ 2023	
ຕົ້ນທຶນ	8,706,948,895
ຫັກ: ຄ່າເຊື່ອມມູນຄ່າສະສົມ	(6,623,313,723)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**2,083,635,172**

9. ຊັບສິມບັດຄົງທີ່ເພື່ອການລົງທຶນ, ສຸດທິ

	ທີ່ດິນ ກີບ	ອາຄານ ກີບ	ລວມ ກີບ
ວັນທີ1 ມັງກອນ 2023			
ຕົ້ນທຶນ	194,059,035,920	10,637,379,752	204,696,415,672
ຫັກ: ຄ່າຫຼ້ຍຫ້ຽນສະສົມ	-	(4,533,689,043)	(4,533,689,043)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**194,059,035,920**	**6,103,690,709**	**200,162,726,629**
ສຳລັບປີສິ້ນສຸດວັນທີ 31 ທັນວາ 2023			
ຍອດຍົກມາຕາມບັນຊີສຸດທິ	194,059,035,920	6,103,690,709	200,162,726,629
ສະສາງ			
ຄ່າຫຼ້ຍຫ້ຽນ (ບົດອະທິບາຍຂໍ້ 20)	-	(685,589,948)	(685,589,948)
ມູນຄ່າຍັງເຫຼືອຕາມບັນຊີ ສຸດທິ	**194,059,035,920**	**5,418,100,761**	**199,477,136,681**
ວັນທີ 31 ທັນວາ 2023			
ຕົ້ນທຶນ	194,059,035,920	10,637,379,752	204,696,415,672
ຫັກ: ຄ່າຫຼ້ຍຫ້ຽນສະສົມ	-	(5,219,278,991)	(5,219,278,991)
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	**194,059,035,920**	**5,418,100,761**	**199,477,136,681**

10. ການລົງທຶນໃນບໍລິສັດໃນເຄືອ

	2023 ກີບ	2022 ກີບ
ວັນທີ 1 ມັງກອນ	**198,000,000,000**	**198,000,000,000**
ເພີ່ມຂຶ້ນ	-	-
ວັນທີ 31 ທັນວາ	**198,000,000,000**	**198,000,000,000**

ມູນຄ່າທີ່ຮັບຮູ້ໃນໃບລາຍງານຖານະການເງິນມີດັ່ງລຸ່ມນີ້:

ຊື່ວິສະຫະກິດ	ດຳເນີນງານໃນ ປະເທດ	ກິດຈະກຳຂອງທຸລະກິດ	ສ່ວນເປັນເຈົ້າ ຂອງຖືໂດຍ ບໍລິສັດ		ສ່ວນເປັນເຈົ້າ ຂອງຖືໂດຍ ຜູ້ຖື ຮຸ້ນສ່ວນນ້ອຍ		ການລົງທຶນໃນອີທິຕົ້ນທຶນ	
			2023 (%)	2022 (%)	2023 (%)	2022 (%)	2023 ກີບ	2022 ກີບ
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ສ.ປ.ປ ລາວ	ນຳເຂົ້າ ແລະ ສົ່ງອອກ	99%	99%	1%	1%	148,500,000,000	148,500,000,000
ບໍລິສັດ ປິໂຕຣເທຣດ ດີສທະ ບິວຊັນ ຈຳກັດ	ສ.ປ.ປ ລາວ	ຂາຍຍ່ອຍ ແລະ ຂາຍສົ່ງ	99%	99%	1%	1%	49,500,000,000	49,500,000,000

11. ຊັບສິນບໍ່ໝຸນວຽນອື່ນໆ

	2023 ກີບ	2022 ກີບ
ຈ່າຍລ່ວງໜ້າ*	39,166,780,757	40,354,452,945
ຈ່າຍລ່ວງໜ້າສຳລັບສະຖານີປ້ຳນ້ຳມັນ ແລະ ອື່ນໆ	6,137,238,000	6,207,238,000
	45,304,018,757	**46,561,690,945**

*ສ່ວນໃຫຍ່ປະກອບມີ ຈ່າຍລ່ວງໜ້າໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຈຳນວນ 34,419,839,505 ກີບ (2022: 34,419,839,505 ກີບ) (ບົດອະທິບາຍຂໍ້ 23.3) ແລະ ຈ່າຍລ່ວງໜ້າອື່ນໆ

12. ໜີ້ຕ້ອງສົ່ງທາງການຄ້າ

	2023 ກີບ	2022 ກີບ
ໜີ້ຕ້ອງສົ່ງທາງການຄ້າ - ພາກສ່ວນທີ່ສາມ	5,444,905,589	5,768,371,684
ໜີ້ຕ້ອງສົ່ງທາງການຄ້າ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 23.3)	1,325,322,133	1,417,019,095
	6,770,227,722	**7,185,390,779**

13. ໜີ້ຕ້ອງສົ່ງອາກອນ

	2023 ກີບ	2022 ກີບ
ໜີ້ຕ້ອງສົ່ງອາກອນມູນຄ່າເພີ່ມ	3,356,864,701	2,570,742,688
ໜີ້ຕ້ອງສົ່ງອາກອນລາຍຮັບສ່ວນບຸກຄົນ	77,812,841	133,804,915
ໜີ້ຕ້ອງສົ່ງອາກອນອື່ນໆ ແລະ ຕາມລະບຽບການ*	3,590,426,319	5,689,149,520
	7,025,103,861	**8,393,697,123**

*ສ່ວນໃຫຍ່ແມ່ນຍອດຄ້າງຊຳລະຂອງໜີ້ຕ້ອງສົ່ງ ແມ່ນອີງຕາມການປະເມີນ ຂອງເຈົ້າໜ້າທີ່ສ່ວຍສາອາກອນ ລົງວັນທີ 27 ທັນວາ 2019.

ເຈົ້າໜ້າທີ່ອາກອນໄດ້ກວດກາ ແລະ ອອກປົດບັນທຶກກ່ຽວກັບພັນທະຂອງຄ່າໃຊ້ຈ່າຍອາກອນ ສຳລັບ ສົກປີ 2014 ຫາ 2017 ຈຳນວນ 20,835,576,105 ກີບ. ພ້ອມກັນນີ້, ເຈົ້າໜ້າທີ່ອາກອນໄດ້ລະບຸໃນປົດບັນທຶກວ່າບໍລິສັດອາດຈະມີພັນທະໃນການຈ່າຍຄ່າປັບໄໝ ສຳລັບ ສົກປີ 2014 ຫາ 2017 ຈຳນວນ 7,417,484,961 ກີບ ເຊິ່ງຈຳນວນດັ່ງກ່າວແມ່ນຍັງບໍ່ສາມາດຕັດສິນໄດ້ ແລະ ຕ້ອງໄດ້ຂໍຄຳເຫັນຈາກກະຊວງການເງິນ.

ຜູ້ບໍລິຫານໄດ້ພິຈາລະນາ ບັນທຶກລາຍຈ່າຍອາກອນຈຳນວນ 20,835,576,105 ກີບ ໃນບົດລາຍງານການເງິນ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2019, ແລະ ໜີ້ຄ້າງຊຳລະວັນທີ 31 ທັນວາ 2023 ແມ່ນ 3,500,000,000 ກີບ (2022: 5,600,000,000 ກີບ); ໃນລະຫວ່າງປີ ບໍລິສັດໄດ້ຊຳລະ 2,100,000,000 ກີບ.

13. ໜີ້ຕ້ອງສົ່ງອາກອນ (ຕໍ່)

ກ່ຽວກັບພັນທະທີ່ຕ້ອງເສຍຄ່າປັບໃໝ ສຳລັບ ສົກປີ 2014 ຫາ 2017 ຈຳນວນ 7,417,484,961 ກີບ. ກຸ່ມບໍລິສັດ ໄດ້ຮັບບົດບັນທຶກຈາກກົມສ່ວຍສາອາກອນ ອີງຕາມເອກະສານອ້າງອີງ ເລກທີ 0210 ລົງວັນທີ 28 ມັງກອນ 2020, ບາງສ່ວນຂອງພັນທະຄ່າປັບໃໝ ຂອງປີ 2014 ຫາ 2017 ຈຳນວນ 964,759,679 ກີບ ແມ່ນໄດ້ຮັບອະນຸຍາດໃຫ້ຍົກເວັ້ນ. ດັ່ງນັ້ນ, ໃນວັນທີ 31 ທັນວາ 2023 ກຸ່ມບໍລິສັດ ມີພັນທະຄ່າປັບໃໝທີ່ຍັງສະຫຼຸບບໍ່ໄດ້ ແລະ ຕ້ອງຂໍຄຳຄິດເຫັນສຸດທ້າຍຈາກກະຊວງການເງິນ ຈຳນວນ 6,452,725,282 ກີບ (2022: 6,452,725,282 ກີບ).

ໃນຂະນະນີ້, ຜູ້ບໍລິຫານ ພວມດຳເນີນການຂໍການຍົກເວັ້ນພັນທະດັ່ງກ່າວ. ເນື່ອງຈາກວ່າຍັງບໍ່ມີຄວາມແນ່ນອນຂອງຈຳນວນທີ່ຈະຖືກປັບໃໝ, ຜູ້ບໍລິຫານຈຶ່ງໄດ້ພິຈາລະນາບໍ່ບັນທຶກໜີ້ຕ້ອງສົ່ງ ຄ່າປັບໃໝ ຈຳນວນ 6,452,725,282 ກີບ (2022: 6,452,725,282 ກີບ) ເຂົ້າໃນບົດລາຍງານການເງິນ.

14. ເງິນກູ້ຢືມ

	2023 ກີບ	2022 ກີບ
ໝູນວຽນ		
ສ່ວນໝູນວຽນຂອງເງິນກູ້ຢືມໄລຍະຍາວຈາກທະນາຄານ	-	66,324,000,000
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 23.4)	293,799,915,008	125,031,503,214
	293,799,915,008	**191,355,503,214**
ບໍ່ໝູນວຽນ		
ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 23.4)	514,855,649,756	584,370,984,000
	514,855,649,756	**584,370,984,000**
	808,655,564,764	**775,726,487,214**

ການເຄື່ອນໄຫວຂອງເງິນກູ້ຢືມສາມາດວິເຄາະໄດ້ດັ່ງລຸ່ມນີ້

	2023 ກີບ	2022 ກີບ
ວັນທີ 1 ມັງກອນ	775,726,487,214	456,539912,000
ເງິນກູ້ຢືມໄດ້ຮັບພາຍໃນປີ	663,206,782,957	686,779,240463
ເງິນກູ້ຢືມໄດ້ຊຳລະຄືນພາຍໃນປີ	(794,034,232,000)	(579,193,592,000)
ຂາດທຶນລໍຖ້າຕັດບັນຊີຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	163,756,526,593	211,600,926,751
ວັນທີ 31 ທັນວາ	**808,655,564,764**	**775,726,487,214**

14. ເງິນກູ້ຢືມ (ຕໍ່)

ຜູ້ໃຫ້ກູ້ຢືມ	ເງື່ອນໄຂການຊຳລະ	ໄລຍະເວລາເບື້ອງຕົ້ນ	ຂະຫຍາຍເວລາໃໝ່ ໃນລະຫວ່າງ ປີ 2023	ວົງເງິນກູ້	ອັດຕາດອກເບ້ຍຕໍ່ປີ	ຫຼັກຊັບຄ้ำປะกัน	ยอดเหลือในวันที่ 31 ทันวา 2023
ບໍລິສັດ ປິຈລະພາ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	29 ທັນວາ 2019 ເປັນຕົ້ນໄປ	ບໍ່ມີ	4,398,535 ໂດລາ	0%	ບໍ່ມີ	4,398,535 ໂດລາ (ทຽบเท่า 90,605,422,465 กีบ)
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	11 ເມສາ 2023 ເປັນຕົ້ນໄປ	ບໍ່ມີ	66,697,256,733 ກີບ	10%	ບໍ່ມີ	54,276,256,733 ກີบ
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ຕົ້ນທຶນ ແລະ ດອກເບ້ຍຈະຕ້ອງຊຳລະຕາມການຮຽກຮ້ອງຂອງຜູ້ໃຫ້ກູ້	25 ທັນວາ 2021 ເປັນຕົ້ນໄປ	ບໍ່ມີ	1,302,300 ໂດລາ 51,51,000 ບາດ	10%	ບໍ່ມີ	1,302,300 ໂດລາ 51,51,000 ບาด (ทຽบเท่า 60,168,749,010 ກีบ)
ບໍລິສັດ ປິໂຕຣເທຣດ ນຳເຂົ້າ-ສົ່ງອອກ ຈຳກັດ	ຕົ້ນທຶນ: ຊຳລະຕາມ “ຕາຕະລາງຊຳລະເງິນກູ້” ດອກເບ້ຍ: ຊຳລະທຸກເດືອນ	25 ທັນວາ 2023 – 25 ທັນວາ 2028	ບໍ່ມີ	160,315,954,896 ກີบ	9%	ບໍ່ມີ	160,315,954,896 ກีบ
ทะนาคาน พิงสะหวัน	ຕົ້ນທຶນ: ຊຳລະ 4 ງວດຕໍ່ປີ ตาม “ตาตะลางชำละเงินกู้” ดอกเบ้ย: ชำละทุกเดือน	23 ทันยา 2019 – 26 ทันวา 2023	25 ทันวา 2023 – 25 ทันวา 2028	691,400,000 บาด	9%	- ดิน และ อาคาน 11 แห่ง - สันยาสะหมองน้ำมันแก่ บໍลิสัดพุเบ้ย จำกัด, บໍลิสัด ยุนนาน ภานก่ำสิ้าง และ ภาน ลิงทึน (ลาอ) จำกัดผู้ดงอ - ดิน และ ป้ำน้ำมัน 7 แห่ง ของบໍลิสัด ถิสทิบิอชัน จำกัด - สันยาเช่าดินสิ้างป้ำน้ำมัน ของบໍลิสัดปิโตล้ຽม เทดดิ้ง ลาอ มะหาชิน	690,686,600 บาด (ทຽบเท่า 443,289,181,660 กีบ)
						ລວມ	**5,700,835 ໂດລາ** **742,637,600 ບาด** **214,592,211,629 ກีบ** **(ทຽบเท่า 808,655,564,764 กีบ)**

14. ເງິນກູ້ຢືມ (ຕໍ່)

ອັດຕາດອກເບ້ຍເງິນກູ້ຢືມຂອງ ບໍລິສັດ ມີດັ່ງຕໍ່ໄປນີ້:

	2023 ກີບ	2022 ກີບ
ເງິນກູ້ຢືມ		
- ອັດຕາດອກເບ້ຍຄົງຕົວ	808,655,564,764	775,726,487,214
ລວມເງິນກູ້ຢືມ	**808,655,564,764**	**775,726,487,214**

ກຳນົດເວລາເງິນກູ້ຢືມໄລຍະຍາວ ຈາກທະນາຄານ ມີດັ່ງຕໍ່ໄປນີ:

	2023 ກີບ	2022 ກີບ
ໃນລະຫວ່າງ 1 ເຖິງ 2 ປີ	205,050,428,208	775,726,487,214
ໃນລະຫວ່າງ 2 ເຖິງ 5 ປີ	603,605,136,556	-
	808,655,564,764	**775,726,487,214**

15. ໜີ້ສິນໝຸນວຽນອື່ນໆ

	2023 ກີບ	2022 ກີບ
ເງິນລ່ວງໜ້າຈາກລູກຄ້າ	10,940,649,799	7,413,536,972
ໜີ້ຄ້າງຂ່າຍ ແລະ ໜີ້ຕ້ອງສົ່ງອື່ນໆ	8,798,805,215	8,556,195,782
ໜີ້ຕ້ອງສົ່ງອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 23.3)	153,268,523,451	212,765,808,189
ກຳໄລຈາກອັດຕາແລກປ່ຽນທີ່ບໍ່ໄດ້ເກີດຂຶ້ນຈິງ	71,642,374,152	50,442,972,011
	244,650,352,617	**279,178,512,954**

16. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນ

	ຈຳນວນຮຸ້ນ ຮຸ້ນ	ຮຸ້ນສາມັນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ລວມ ກີບ
ວັນທີ 1 ມັງກອນ 2022	235,000,000	470,000,000,000	27,638,932,340	497,638,932,340
ການອອກຮຸ້ນໃໝ່	-	-	-	-
ວັນທີ 31 ທັນວາ 2022	**235,000,000**	**470,000,000,000**	**27,638,932,340**	**497,638,932,340**
ການອອກຮຸ້ນໃໝ່	-	-	-	-
ວັນທີ 31 ທັນວາ 2023	**235,000,000**	**470,000,000,000**	**27,638,932,340**	**497,638,932,340**

17. ຄັງສະສົມຕາມລະບຽບການ

ຄັງສະສົມຕາມລະບຽບການ ແມ່ນສ້າງຂຶ້ນຕາມກົດໝາຍວິສາຫະກິດຂອງ ສປປ ລາວ ເຊິ່ງກຳນົດການຈັດສັນກຳໄລຕາມກົດໝາຍຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີ, ພາຍຫຼັງຫັກອາຂາດທຶນສະສົມ (ຖ້າມີ) ຈົນກ່ວາຄັງສຳຮອງດັ່ງກ່າວບັນລຸ 50% ຈົນກວ່າ ຄັງສະສົມດັ່ງກ່າວບັນລຸ 50% ຂອງມູນຄ່າທຶນຈົດທະບຽນ.

ລະຫວ່າງປີ ແມ່ນບໍ່ມີການການເຄື່ອນໄຫວຂອງ ຄັງສະສົມຕາມລະບຽບການ, ຍອດຄົງເຫລືອ ວັນທີ 31 ທັນວາ 2023 ແມ່ນ 3,708,530,711 ກີບ (2022: 3,708,530,711 ກີບ).

18. ລາຍຮັບ

	2023 ກີບ	2022 ກີບ
ລາຍຮັບຈາກການບໍລິການບັດ Plus card	2,050,135,402	1,733,080,077

19. ລາຍຮັບອື່ນໆ

	2023 ກີບ	2022 ກີບ
ລາຍຮັບຄ່າເຊົ່າ (ບົດອະທິບາຍຂໍ້ 23.1)	5,813,028,168	4,225,249,608
ລາຍຮັບດອກເບ້ຍ (ບົດອະທິບາຍຂໍ້ 23.1)	10,547,955,474	9,086,392,733
ລາຍຮັບຄ່າບໍລິຫານຈັດການ (ບົດອະທິບາຍຂໍ້ 23.1)	22,734,403,205	24,181,171,244
ລາຍຮັບຄ່າບໍລິການໄອທີ (ບົດອະທິບາຍຂໍ້ 23.1)	16,580,864,203	22,015,946,821
ກຳໄລຈາກການສະສາງຊັບສິນ	-	519,018,692
ລາຍຮັບອື່ນໆ	1,214,262,386	6,768,146,298
	56,890,513,436	**66,795,925,396**

20. ລາຍຈ່າຍຈຳແນກຕາມລັກສະນະເນື້ອໃນ

	2023 ກີບ	2022 ກີບ
ລາຍຈ່າຍຂອງການຂາຍນ້ຳມັນເຊື້ອໄຟ	92,187,130	64,435,437
ຕົ້ນທຶນຄ່າແຮງງານ	9,066,711,462	8,149,047,989
ຄ່າຫຼ້ຍຫ້ຽນ ແລະ ເຊື່ອມມູນຄ່າ (ບົດອະທິບາຍຂໍ້ 7,8,9)	5,145,540,875	5,662,299,920
ຄ່າທຳນຽມທະນາຄານ	1,972,785,746	1,885,578,865
ຄ່າທີ່ປຶກສາ	1,762,356,241	813,576,498
ລາຍຈ່າຍໃນການດຳເນີນງານ ສຳລັບຫ້ອງການຜູ້ຕາງໜ້າ	5,735,817,287	4,000,204,799
ລາຍຈ່າຍຄ່າເຊົ່າ	1,201,809,349	1,482,299,696
ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ	1,613,501,510	1,661,641,660
ລາຍຈ່າຍໃນການຂາຍ	104,096,340	276,727,000

21. ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນສະບັບເລກທີ 259 ມີຜົນບັງຄັບໃຊ້ໃນວັນທີ 1 ມັງກອນ 2020, ບໍລິສັດໄດ້ຄິດໄລ່ອາກອນ ກຳໄລ ຈາກລາຍຮັບ ອັດຕາ 20% (2022: 20%) ຫຼັງຈາກພິຈາລະນາລາຍຮັບ ແລະ ລາຍຈ່າຍທີ່ບໍ່ສາມາດຫັກອອກໄດ້ແມ່ນສອດຄ່ອງກັບ ກົດໝາຍວ່າດ້ວຍສ່ວຍສາອາກອນ.

22. ຂາດທຶນພື້ນຖານຕໍ່ຮຸ້ນ

ພື້ນຖານການຄິດໄລ່ຂາດທຶນຕໍ່ຮຸ້ນ ແມ່ນຄິດໄລ່ຈາກການແບ່ງຂາດທຶນສຸດທິ ໃຫ້ຜູ້ຖືຮຸ້ນດ້ວຍວິທີການສະເລ່ຍຂອງຈຳນວນຮຸ້ນສາມັນ ທີ່ອອກທັງໝົດ.

	2023	2022
ຂາດທຶນ ສຸດທິຂອງຜູ້ຖືຮຸ້ນ (ກີບ)	(42,365,244,926)	(5,966,392,567)
ຈຳນວນຮຸ້ນ ສະເລ່ຍຕາມຮຸ້ນສາມັນທີ່ອອກທັງໝົດ (ຮຸ້ນ)	235,000,000	235,000,000
ຂາດທຶນ ຕໍ່ຮຸ້ນ (ກີບ)	(180)	(25)

23. ພາກສ່ວນທີ່ກ່ຽວຂ້ອງ

ນິຕິບຸກຄົນ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ພາຍໃຕ້ການຄວບຄຸມຂອງ ບໍລິສັດ ລວມເຖິງການລົງທຶນໃນນິຕິບຸກຄົນ ແລະ ບຸກຄົນ ຫຼື ນິຕິບຸກຄົນ ມີອິດທິພົນຫຼາຍຕໍ່ກັບ ບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງ ບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ, ບໍ່ໄດ້ ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນລຸ່ມນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງ

23.1 ການຂາຍສິນຄ້າ ແລະ ບໍລິການ

	2023 ກີບ	2022 ກີບ
ຂາຍບໍລິການໃຫ້ແກ່:		
ບໍລິສັດໃນເຄືອ (ບົດອະທິບາຍ ຂໍ້ທີ 18)		
ລາຍຮັບດອກເບ້ຍ	9,011,988,390	8,000,204,492
ຄ່າທຳນຽມບໍລິຫານ	22,734,403,205	24,181,171,244
ຄ່າບໍລິການ ໄອທີ	15,875,981,308	14,138,760,000
ຄ່າເຊົ່າ	1,994,017,794	1,790,672,000
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍ ຂໍ້ທີ 18)		
ລາຍຮັບດອກເບ້ຍ	1,535,967,084	1,086,188,241
ຄ່າເຊົ່າ	3,819,010,374	2,434,577,608
ຄ່າບໍລິການ ໄອທີ ແລະອື່ນໆ	704,882,895	7,877,186,821
	55,676,251,050	**59,508,760,406**

24. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

23.2 ການຊື້ສິນຄ້າ ແລະ ບໍລິການ

	2023 ກີບ	2022 ກີບ
ຊື້ບໍລິການຈາກ:		
ບໍລິສັດໃນເຄືອ		
ລາຍຈ່າຍດອກເບ້ຍ	9,167,046,433	4,446,625,617
ພາກສ່ວນທີ່ກ່ຽວຂ້ອງ		
ຄ່າບໍລິການອື່ນໆ	-	93,921,736
ລາຍຈ່າຍດອກເບ້ຍ	56,823,471,112	45,001,933,515
	65,990,517,545	**49,542,480,868**

23.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ / ຊື້ສິນຄ້າ / ບໍລິການ

	2023 ກີບ	2022 ກີບ
ໜີ້ຕ້ອງຮັບຈາກ:		
ໜີ້ຕ້ອງຮັບທາງການຄ້າ		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 4)	5,770,070,800	11,908,699,209
	5,770,070,800	**11,908,699,209**
ຊັບສິນໝຸນວຽນອື່ນໆ		
ບໍລິສັດໃນເຄືອ		
ໜີ້ຕ້ອງຮັບຈາກການປະກອບຫຸ້ນ (ບົດອະທິບາຍຂໍ້ 6)	36,368,330,104	36,368,330,104
ໜີ້ຕ້ອງຮັບອື່ນໆ	5,348,540,860	48,532,229,568
ໜີ້ຕ້ອງຮັບ ດອກເບ້ຍ	-	16,750,933,866
	41,716,870,964	**101,651,493,538**
ຜູ້ບໍລິຫານຫຼັກ (ບົດອະທິບາຍຂໍ້ 6)		
ໜີ້ຕ້ອງຮັບອື່ນໆ ຈາກສ່ວນເພີ່ມມູນຄ່າຮຸ້ນ	22,497,682,340	22,497,682,340
ໜີ້ຕ້ອງຮັບອື່ນໆ ຈາກການຂາຍຍານພາຫະນະ	16,149,973,862	17,146,313,862
ໜີ້ຕ້ອງຮັບ ດອກເບ້ຍ	24,073,582	-
	38,671,729,784	**39,643,996,202**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 6)		
ໜີ້ຕ້ອງຮັບ ດອກເບ້ຍ	18,604,645,702	17,053,338,654
ເງິນລ່ວງໜ້າ ໃຫ້ພາກສ່ວນທີ່ກ່ຽວຂ້ອງ	35,352,955,706	30,478,301,632
ໜີ້ຕ້ອງຮັບອື່ນໆ ຈາກການບໍລິການຄ່າເຊົ່າ	18,968,787,118	17,137,771,595
	72,926,388,526	**64,669,411,881**
	153,314,989,274	**205,964,901,621**
ຊັບສິນບໍ່ໝຸນວຽນອື່ນໆ		
ຜູ້ບໍລິຫານຫຼັກ (ບົດອະທິບາຍຂໍ້ 11)		
ຈ່າຍລ່ວງໜ້າ	34,419,839,505	34,419,839,505
	34,419,839,505	**34,419,839,505**
ລວມໜີ້ຕ້ອງຮັບທັງໝົດ	**193,504,899,579**	**252,293,440,335**

23. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

23.3 ຍອດຄ້າງຊຳລະທີ່ເກີດຂຶ້ນຈາກການຂາຍ / ຊື້ສິນຄ້າ / ບໍລິການ (ຕໍ່)

	2023 ກີບ	2022 ກີບ
ໜີ້ຕ້ອງສົ່ງໃຫ້ແກ່:		
ໜີ້ຕ້ອງສົ່ງການຄ້າ		
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 12)	1,325,322,133	1,417,019,095
	1,325,322,133	**1,417,019,095**
ໜີ້ສິນໝຸນວຽນອື່ນໆ		
ບໍລິສັດໃນເຄືອ		
ໜີ້ຕ້ອງສົ່ງຈາກການປະກອບທຶນ (ບົດອະທິບາຍຂໍ້ 15)	56,306,694,922	56,306,694,922
ຍອດຄ້າງຊຳລະ ລາຍຈ່າຍດອກເບ້ຍ	13,265,445,143	4,446,625,617
ອື່ນໆ	82,056,583,804	151,055,603,884
	151,628,723,869	**211,808,924,423**
ພາກສ່ວນທີ່ກ່ຽວຂ້ອງອື່ນໆ (ບົດອະທິບາຍຂໍ້ 15)		
ຍອດຄ້າງຊຳລະ ລາຍຈ່າຍດອກເບ້ຍ	617,961,630	676,571,252
ອື່ນໆ	1,021,837,952	280,312,514
	1,639,799,582	**956,883,766**
ລວມໜີ້ຕ້ອງສົ່ງທັງໝົດ	**154,593,845,584**	**214,182,827,284**

23.4 ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ

	2023 ກີບ	2022 ກີບ
ວັນທີ 1 ມັງກອນ	709,402,487,214	390,215,912,000
ເງິນກູ້ຢືມໄດ້ຮັບພາຍໃນປີ	663,206,782,957	686,779,240,462
ເງິນກູ້ຢືມໄດ້ຊຳລະຄືນພາຍໃນປີ	(727,710,232,000)	(579,193,592,000)
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	163,756,526,593	211,600,926,752
ວັນທີ 31 ທັນວາ	**808,655,564,764**	**709,402,487,214**

ເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງ ທີ່ມີໄລຍະເວລາຊຳລະຄືນສະເພາະເຈາະຈົງ ແລະ ມີອັດຕາດອກເບ້ຍ 0%, 9-10% (2022: 9%-10%) ຕໍ່ປີ (ບົດອະທິບາຍຂໍ້ 14).

23. ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

23.5 ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ

	2023 ກີບ	2022 ກີບ
ວັນທີ 1 ມັງກອນ	139,898,947,042	107,662,386,845
ເງິນກູ້ຢືມໄດ້ຮັບຊຳລະຄືນພາຍໃນປີ	(12,421,000,000)	(289,130,025)
ກຳໄລຈາກອັດຕາແລກປ່ຽນທີ່ຍັງບໍ່ເກີດຂຶ້ນຈິງ	18,255,364,922	32,525,690,222
ວັນທີ 31 ທັນວາ	**145,733,311,964**	**139,898,947,042**

ເງິນໃຫ້ກູ້ຢືມແກ່ພາກສ່ວນທີ່ກ່ຽວຂ້ອງ ທີ່ມີໄລຍະເວລາຊຳລະຄືນສະເພາະເຈາະຈົງ ແລະ ມີອັດຕາດອກເບ້ຍ 6.5-12% (2022: 6.5-12%) ຕໍ່ປີ.

23.6 ຄ່າຕອບແທນຂອງຜູ້ບໍລິຫານຫຼັກ

ຄ່າຕອບແທນຈ່າຍໃຫ້ຜູ້ບໍລິຫານຫຼັກມີດັ່ງລຸ່ມນີ້:

	2023 ລ້ານກີບ	2022 ລ້ານກີບ
ເງິນເດືອນ ແລະ ອື່ນໆ	3,434	2,717

24. ພາລະຜູກພັນ

ກ) ພາລະຜູກພັນສັນຍາເຊົ່າ ທີ່ທາງບໍລິສັດເປັນຜູ້ເຊົ່າ

ບໍລິສັດເຊົ່າທີ່ດິນ ພາຍໃຕ້ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້.

ຈຳນວນເງິນທີ່ຕ້ອງຊຳລະພາຍໃຕ້ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້ ມີດັ່ງນີ້:

	2023 ກີບ	2022 ກີບ
ຕ່ຳກວ່າ 1 ປີ	3,731,845,750	7,872,850,000
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	8,619,152,029	1,690,046,400
ເກີນ 5 ປີ	3,035,320,807	4,194,936,600
	15,386,318,586	**13,757,833,000**

24. ພາລະຜູກພັນ (ຕໍ່)

ຂ) ພາລະຜູກພັນສັນຍາເຊົ່າ ທີ່ທາງບໍລິສັດເປັນຜູ້ໃຫ້ເຊົ່າ

ບໍລິສັດ ໄດ້ໃຫ້ເຊົ່າ ສະຖານີປ້ຳນ້ຳມັນ ແລະ ຫ້ອງການ ພາຍໃຕ້ ສັນຍາເຊົ່າໃນການດຳເນີນງານ. ໜີ້ຕ້ອງຮັບຄ່າເຊົ່າໃນ ອະນາຄົດຂັ້ນຕ່ຳ ໃນວັນທີ 31 ທັນວາ ພາຍໃຕ້ ສັນຍາເຊົ່າໃນການດຳເນີນງານ ທີ່ບໍ່ສາມາດຍົກເລີກໄດ້ ມີດັ່ງນີ້:

	2023 ກີບ	2022 ກີບ
ຕ່ຳກວ່າ 1 ປີ	1,168,835,419	1,249,272,000
ເກີນ 1 ປີ ແຕ່ ບໍ່ເກີນ 5 ປີ	5,844,177,096	4,997,088,000
ເກີນ 5 ປີ	12,194,872,098	18,099,688,819
	19,207,884,613	**24,346,048,819**

25. ເຫດການທີ່ເກີດຂຶ້ນຫຼັງວັນທີໃນໃບສະຫລຸບຊັບສິນບັດ

ບໍ່ມີເຫດການທີ່ເປັນສາລະສຳຄັນທີ່ຈະສົ່ງຜົນກະທົບຕໍ່ຕົວເລກໃນບົດລາຍງານການເງິນຂອງບໍລິສັດ.